## ຍຸດທະສາດ ແລະ ແຜນງານ ວຽກງານ ຖວທ 2016-2020:

ເພື່ອເຮັດໃຫ້ການພັດທະນາວຽກງານ ໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບການຈັດຕັ້ງປະຕິບັດຕາມແຜນ ທີ່ໄດ້ກຳນົດໄວ້ ແລະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ຈຶ່ງໄດ້ກຳນົດແຜນງານ ແລະ ໂຄງການ ຂອງແຕ່ລະຂະແໜງການ ໃນແຜນການ 5 ປີ ຄັ້ງທີ VIII 2016 -2020.

ສຳລັບເອກະສານໃນການກຳນົດແຜນງານ ແລະໂຄງການນີ້ ຈະມີລາຍລະອຽດແຕ່ລະແຜນງານ ແລະຈຳນວນໂຄງການ ຂອງ 4 ວຽກໃຫ່ຍຄືດັ່ງນີ້ :

1. ວຽກງານຖະແຫຼງຂ່າວ ມີ 58 ແຜນງານ 230 ໂຄງການ ມູນຄ່າ 1,696,522.00 ລ້ານກີບ.
2. ວຽກງານວັດທະນະທຳ ມີ 35 ແຜນງານ 994 ໂຄງການ ມູນຄ່າ 2,390,803.00 ລ້ານກີບ.
3. ວຽກງານທ່ອງທ່ຽວ ມີ 89 ແຜນງານ 962 ໂຄງການ ມູນຄ່າ 1517,989.00 ລ້ານກີບ.
4. ວຽກງານເສນາທິການ ມີ 26 ແຜນງານ 156 ໂຄງການ ມູນຄ່າ 149,676.00 ລ້ານກີບ.

### 4.1. ວຽກງານ ຖະແຫຼງຂ່າວ ສື່ມວນຊົນ

**4.1.1. ເພື່ອບັນລຸຈຸດປະສົງ ພັດທະນາສື່ມວນຊົນລາວ ໃຫ້ມີຄຸນນະພາບ, ເປັນລະບົບ, ທັນສະໄໝ, ວ່ອງໄວ, ຊັດເຈນ ແລະ ທັນເຫດການ, ປະກອບມີ 5 ຍຸດທະສາດ.**

**ຍຸດທະສາດທີ 1: ດຳເນີນການພັດທະນາ ແລະ ປັບປຸງ ວັດຖຸອຸປະກອນເຕັກນິກວິທະຍຸ, ໂທລະພາບ ຈາກລະບົບອານາລັອກ ໄປສູ່ລະບົບ ດິຈິຕ໋ອນ ໃຫ້ເປັນລະບົບຄົບຊຸດ, ທັນສະໄໝໃນຂອບເຂດທົ່ວປະເທດ ແລະ ສາມາດເຊື່ອມໂຍງກັບສາກົນ, ປະກອບມີ 3 ແຜນງານ ແລະ 25 ໂຄງການດັ່ງນີ້:**

**ແຜນງານທີ 1:** ແຜນງານລົງສຳຫຼວດເກັບກຳຂໍ້ມູນ ວິທະຍຸ-ໂທລະພາບ ທົ່ວປະເທດ ແລະ ຂຽນບົດວິພາກເສດຖະກິດ ໃນການປ່ຽນຖ່າຍເຕັກນິກວິທະຍຸ-ໂທລະພາບ ຈາກລະບົບອານາລັອກ ໄປສູ່ດິຈິຕ໋ອນ,ປະກອບມີ 2 ໂຄງການ.

**ແຜນງານທີ 2:** ແຜນງານກະກຽມຄວາມພ້ອມ ໃນການຫັນປ່ຽນຖ່າຍເຕັກນິກວິທະຍຸ-ໂທລະພາບ ທົ່ວປະເທດ ໄປສູ່ລະບົບດິຈິຕ໋ອນ, ປະກອບມີ 6 ໂຄງການ.

**ແຜນງານທີ 3:** ແຜນງານປ່ຽນຖ່າຍເຕັກນິກວິທະຍຸ-ໂທລະພາບ ທົ່ວປະເທດ ໄປສູ່ລະບົບດິຈິຕ໋ອນ, ປ່ຽນຖ່າຍອຸປະກອນ ຂອງລະບົບຫ້ອງອັດ, ຫ້ອງຕັດຕໍ່, ລະບົບເກັບມ້ຽນຂໍ້ມູນ ຂອງວິທະຍຸກະຈາຍສຽງແຫ່ງຊາດ ຈາກລະບົບອານາລັອກໄປສູ່ດິຈິຕ໋ອນ, ປ່ຽນຖ່າຍອຸປະກອນລະບົບການຖ່າຍທອດສຽງ, ປ່ຽນຖ່າຍລະບົບສົ່ງສັນຍານ, ພ້ອມທັງປັບປຸງ ແລະ ປ່ຽນຖ່າຍເຄື່ອງ ສົ່ງ-ອອກ ອາກາດຈາກລະບົບອານາລັອກ ເປັນລະບົບດິຈິຕ໋ອນ, ປະກອບມີ 17 ໂຄງການ.

**ຍຸດທະສາດທີ 2: ປັບປຸງ ແລະ ຍົກລະດັບພື້ນຖານວັດຖຸອຸປະກອນເຕັກນິກ ຮັບໃຊ້ການຜະລິດຂ່າວທາງໂທລະພາບ, ວິທະຍຸ, ໜັງສືພິມແບບໃໝ່ ໃຫ້ເປັນລະບົບຄົບຊຸດ ເຮັດໃຫ້ການກະຈາຍຂ່າວສານ ໄດ້ທົ່ວເຖິງທຸກພື້ນທີ່, ປະກອບມີ 2 ແຜນງານ ແລະ 9 ໂຄງການ ດັ່ງນີ້:**

**ແຜນງານທີ 1:** ສຳຫຼວດ ແລະ ເກັບກຳພື້ນຖານວັດຖຸອຸປະກອນຮັບໃຊ້ການຜະລິດຂ່າວ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ປັບປຸງ ແລະ ປ່ຽນຖ່າຍອຸປະກອນຮັບໃຊ້ການຜະລິດຂ່າວ, ອຸປະກອນລຶດຖ່າຍທອດ, ພາຫະນະຮັບໃຊ້ການບໍລິການ, ຜະລິດຂ່າວ, ຜະລິດລາຍການ ແລະ ປ່ຽນຖ່າຍພາຫະນະ ກອບ ມີ 7 ໂຄງການ.

**<u>ຍຸດທະສາດທີ 3</u>: ສ້າງພື້ນຖານໂຄງລ່າງ ທາງດ້ານຖະແຫຼງຂ່າວ ສື່ມວນຊົນໃຫ້ເປັນລະບົບຄົບຊຸດ ນັບແຕ່ສູນກາງ ຮອດທ້ອງຖິ່ນ, ເຂດພື້ນຖານຫ່າງໄກສອກຫຼີກ ຜ່ານດາວທຽມ ໄປຍັງພື້ນທີ່ທົ່ວປະເທດ, (ສ້າງ ແລະ ຂະຫຍາຍເຄືອຂ່າຍ ຮັບ-ສົ່ງ ສັນຍານ ວິທະຍຸ-ໂທລະພາບ) ປະກອບມີ 5 ແຜນງານ ແລະ 21 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ປັບປຸງອຸປະກອນເຕັກນິກສະຖານີດາວທຽມ ຫຼັກ 52 ໃຫ້ກາຍເປັນສູນກາງສົ່ງສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມ (UPLINK CENTER), ກອບມີ 6 ໂຄງການ.

**<u>ແຜນງານທີ 2</u>**: ສ້າງຫ້ອງການ ຖວທ ເມືອງ ໃນຂອບເຂດທົ່ວປະເທດ ໃຫ້ກາຍປັນສູນກາງທາງດ້ານ ຖວທ ເມືອງ, ຊຶ່ງລວມມີ ຫ້ອງການ ຖວທ ເມືອງ, ສະຖານີວິທະຍຸຂັ້ນເມືອງ, ສູນກະຈາຍໂທລະໂຄ່ງເມືອງ, ຫ້ອງພິມ ແລະ ຈຳໜ່າຍສິ່ງພິມຂັ້ນເມືອງ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 3:</u>** ຂະຫຍາຍ ແລະ ປັບປຸງ ລະບົບໂທລະໂຄ່ງຂັ້ນບ້ານ, ປະກອບມີ 4 ໂຄງການ.

**<u>ແຜນງານທີ 4:</u>** ປັບປຸງ ສູນກາງເຕັກນິກວິທະຍຸແຫ່ງຊາດ, ປະກອບມີ 7 ໂຄງການ.

**<u>ແຜນງານທີ 5</u>**: ຕິດຕັ້ງວັດຖຸອຸປະກອນ ສຳລັບລະບົບເຄືອຂ່າຍສົ່ງລາຍການ ວິທະຍຸກະຈາຍສຽງແຫ່ງຊາດລົງສູ່ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ໂຄງການ.

**<u>ຍຸດທະສາດທີ 4</u>: ພັດທະນາລະບົບປະສານງານ ໃນການຮັບສົ່ງຂໍ້ມູນຂ່າວສານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຄ່ອງຕົວ ແລະ ປອດໄພ, ປະກອບມີ 2 ແຜນງານ ແລະ ໂຄງການ 15 ຄືດັ່ງນີ້:**

**<u>ແຜນງານທີ 1</u>**: ປັບປຸງລະບົບປະສານງານ ຂໍ້ມູນຂ່າວສານດ້ານສື່ມວນຊົນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ປະກອບມີ 10 ໂຄງການ.

**<u>ແຜນງານທີ 2</u>**: ປັບປຸງລະບົບປະສານງານດ້ານວິທະຍຸຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ປະກອບມີ 5 ໂຄງການ

**<u>ຍຸດທະສາດທີ 5</u>: ພັດທະນາລະບົບ ຮັບ-ສົ່ງ ຂໍ້ມູນສື່ສິ່ງພິມໃຫ້ທ້ອງຖິ່ນ ແລະ ສ້າງລະບົບການຈັດພິມຂະໜາດນ້ອຍ ເພື່ອຈຳໜ່າຍໃຫ້ທ້ອງຖິ່ນ ໂດຍສະເພາະບັນດາເມືອງ, ປະກອບມີ 1 ແຜນງານ ແລະ 7 ໂຄງການ ຄືດັ່ງນີ້:**

**<u>ແຜນງານທີ 1</u>**: ສ້າງ ແລະ ປັບປຸງສູນຈຳໜ່າຍໜັງສືພິມ ແລະ ສື່ສິ່ງພິມອື່ນໆ ໃນຂອບເຂດທົ່ວປະເທດ ເພື່ອນຳເອົາສື່ສິ່ງພິມ ໃຫ້ລົງເຖິງ 145 ເມືອງ ທົ່ວປະເທດ, ກອບມີ 7 ໂຄງການ.

**4.1.2. ເພື່ອບັນລຸຈຸດປະສົງ ໃນການສືບຕໍ່ສ້າງໃຫ້ສື່ມວນຊົນລາວ ເປັນກະບອກສຽງອັນແຫຼມຄົມ ຂອງ ພັກ-ລັດ ທັງລວງເລິກ ແລະ ລວງກວ້າງ, ມີຄວາມຫຼາກຫຼາຍທັງຄົບຖ້ວນດ້ານເນື້ອໃນ, ເປັນແຫຼ່ງສະໜອງ ຂໍ້ມູນຂ່າວສານ ແລະ ໃຫ້ສາລະຄວາມຮູ້ຢ່າງຮອບດ້ານ, ປະກອບມີ 4 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ໃນການປັບປຸງເນື້ອໃນຂ່າວ, ຂະຫຍາຍຊ່ອງລາຍການ ຂອງໂທລະພາບ, ວິທະຍຸ, ໜັງສືພິມ ໃຫ້ມີຄວາມຫຼາກຫຼາຍ, ວ່ອງໄວ ແລະ ທັນເຫດການ, ປະກອບມີ 4 ແຜນງານ ແລະ 11 ໂຄງການຄື:**

**<u>ແຜນງານທີ 1</u>**: ຂະຫຍາຍເວລາພາກຂ່າວ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ສ້າງສະຖານີຂ່າວ, ປະກອບມີ 1 ໂຄງການ.

**<u>ແຜນງານທີ່ 3</u>**: ຊີ້ນຳເນື້ອໃນການອອກຂ່າວ ໃນແຕ່ລະໄລຍະ, ປະກອບມີ 3 ໂຄງການ.

**<u>ແຜນງານທີ່ 4</u>**: ນຳເອົາ ເນື້ອໃນລາຍການຈາກສື່ແບບເກົ່າ (ໜັງສືພິມ, ວິທະຍຸ, ໂທລະພາບ...) ໄປເຜີຍແຜ່ຜ່ານສື່ແບບໃໝ່ (ມືຖື, ອິນເຕີເນັດ), ປະກອບມີ 5 ໂຄງການ.

**<u>ຍຸດທະສາດທີ 2</u>: ປັບປຸງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດຂອງບັນດານັກຂ່າວ, ໂຄສົກ ຫຼື ຜູ້ລາຍງານຂ່າວໃຫ້ໄດ້ຕາມມາດຕະຖານສາກົນ ແລະ ເພີ່ມຈຳນວນນັກຂ່າວ, ໂຄສົກຂຶ້ນໃຫ້ໄດ້ຕາມຄວາມຕ້ອງການ ຂອງວຽກງານຂ່າວ, ປະກອບມີ 1 ແຜນງານ ແລະ 9 ໂຄງການ ຄືດັ່ງນີ້:**

**<u>ແຜນງານທີ 1</u>**: ປັບປຸງ ແລະ ຍົກລະດັບຄວາມຮູ້ສາມາດ ຄວາມສາມາດໃນການປະຕິບັດວຽກງານຕົວຈິງຂອງນັກຂ່າວ, ນັກບັນນາທິການ, ນັກຖ່າຍທຳ, ນັກຕັດຕໍ່, ໂຄສົກ , ຜູ້ລາຍງານຂ່າວທົ່ວໄປ, ຜູ້ລາຍງານຂ່າວພາສາເຜົ່າ ແລະ ລາຍງານຂ່າວພາສາຕ່າງປະເທດ ປະກອບມີ 9 ໂຄງການ:

**<u>ຍຸດທະສາດທີ 3</u>: ປັບປຸງເນື້ອໃນ ສື່ສານມວນຊົນ ຂອງໂທລະພາບ, ວິທະຍຸ, ສື່ສິ່ງພິມສື່ແບບໃໝ່ ໃຫ້ມີຄວາມຫຼາກຫຼາຍ, ປະກອບມີ 3 ແຜນງານ ແລະ 9 ໂຄງການດັ່ງນີ້:**

**<u>ແຜນງານທີ່ 1</u>**: ປັບປຸງ ແລະ ພັດທະນາຮູບແບບ ຂອງໜັງສືພິມພາສາຕ່າງປະເທດ ແລະ ວາລະສານຝຣັ່ງເອີເລໂນເວເຕີ, ປະກອບມີ 1 ໂຄງການ.

**<u>ແຜນງານທີ 2</u>**: ປັບປຸງຮູບແບບການຜະລິດຢູ່ ທຊລ 1 ແລະ ທຊລ 3 ໃຫ້ມີຫຼາຍຮູບຫຼາຍສີ, ປະກອບມີ 4 ໂຄງການ.

**<u>ແຜນງານທີ 3</u>**: ຜະລິດລາຍການ ສາລະຄະດີທົ່ວລາວ ແລະ ລະຄອນໂທລະພາບ ປະກອບມີ 4 ໂຄງການ

**<u>ຍຸດທະສາດທີ 4</u>: ນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ສາລະໜ້າຮູ້ ແລະ ການບັນເທີງຜ່ານພາຫະນະສື່ມວນຊົນ ລົງສູ່ປະຊາຊົນຢ່າງທົ່ວເຖິງ, ປະກອບມີ 3 ແຜນງານ ແລະ 13 ໂຄງການ ດັ່ງນີ້:**

**<u>ແຜນງານທີ່ 1</u>**: ໂຄສະນາການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ມີ 03 ໂຄງການ.

**<u>ແຜນງານທີ 2</u>**: ຜະລິດລາຍການ ແລະ ການໂຄສະນາການຜະລິດ ຕາມລະດູການຜ່ານຄື້ນວິທະຍຸກະຈາຍ ສຽງແຫ່ງຊາດ, ໂຄສະນາໃຫ້ແກ່ການເຫດການສຸກເສີນຈາກທຳມະຊາດທົ່ວປະເທດ ປະກອບມີ 8 ໂຄງການ.

**<u>ແຜນງານທີ 3</u>**: ຈັດຊື້ເຄື່ອງມືສຳລັບນັກຂ່າວ ເພື່ອເກັບກຳ ແລະ ບັນທຶກຂ່າວ, ປະກອບມີ 2 ໂຄງການ.

**4.1.3. ເພື່ອບັນລຸຈຸດປະສົງສ້າງຄວາມເຂັ້ມແຂງ ແລະ ເງື່ອນໄຂໃນການພັດທະນາກິດຈະກຳ ຈາກສື່ມວນຊົນໃຫ້ມີຄວາມຫຼາກຫຼາຍ, ຕອບສະໜອງໄດ້ຕາມຄວາມຕ້ອງການ ຂອງສັງຄົມ ພ້ອມທັງສ້າງລາຍຮັບວິຊາການ ແລະສາມາດກຸ້ມຕົນເອງທາງດ້ານການເງິນເທື່ອລະກ້າວ, ປະກອບມີ 4 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ສ້າງເຄືອຄ່າຍສື່ມວນຊົນ, ພັດທະນາລາຍການໂທລະພາບ ໃຫ້ມີຄວາມຫຼາກຫຼາຍ ເພື່ອດຶງດູດຄວາມສົນໃຈ ຂອງມວນຊົນ ທັງພາຍໃນ ແລະ ຕ່າງປະເທດ, ປະກອບມີ 2 ແຜນງານ ແລະ 5 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ປັບປຸງຜັງອອກອາກາດປະຈຳວັນ, ປະຈຳເດືອນ, ປະຈຳປີ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ຈັດຕັ້ງທີມງານພາກສາລະຄະດີ, ຮູບເງົາ ລົງທຶນໃສ່ອຸປະກອນຮັບໃຊ້ ແລະ ຊື້ສາລະຄະດີ, ຮູບເງົາ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 2</u>: ປັບປຸງ, ເປີດກ້ວາງຕະຫຼາດສື່ມວນຊົນລາວ ໃຫ້ກວ້າງຂວາງ ໂດຍການພັດທະນາຜະລິດຕະພັນສື່ມວນຊົນ ໃຫ້ມີຄວາມຫຼາກຫຼາຍ, ທັນສະໄໝ, ປະກອບມີ 4 ແຜນງານ ແລະ 5 ໂຄງການ ດັ່ງນີ້:**

**<u>ແຜນງານທີ່ 1</u>**: ປັບປຸງ ແລະ ຂະຫຍາຍການຈຳໜ່າຍ ໜັງສືພິມ, ວາລະສານ, ວີດີໂອສາລະຄະດີ ໃຫ້ກວ້າງຂວາງ, ປະກອບມີ 2 ໂຄງການ.

**<u>ແຜນງານທີ່ 2</u>**: ແຜນປັບປຸງ ແລະ ພັດທະນາວຽກງານຈັດຈຳໜ່າຍ ຂອງສຳນັກງານອົງການ, ມີ 2 ໂຄງການ.

**<u>ແຜນງານທີ່ 3</u>**: ແຜນປັບປຸງ ແລະ ພັດທະນາວຽກງານ ການຜະລິດໜັງສືພິມ ແລະ ວາລະສານຝຣັ່ງເອີເລໂນວາເຕີ ນຳໂຮງພິມແຫ່ງລັດ ແລະ ໂຮງພິມປະຊາຊົນ ໃຫ້ພຽງພໍຕາມຄວາມການ ຂອງສັງຄົມ, ມີ 1 ໂຄງການ

**<u>ຍຸດທະສາດທີ 3</u>: ສ້າງກິດຈະກຳທາງດ້ານສື່ມວນຊົນ ໃຫ້ມີຄວາມຫຼາກຫຼາຍ ທັງພາຍໃນ ແລະ ຕ່າງປະເທດ ເພື່ອໂຄສະນາສື່ມວນຊົນລາວ ໃນເວທີສາກົນ, ປະກອບມີ 2 ແຜນງານ ແລະ 7 ໂຄງການ ຄືດັ່ງນີ້:**

**<u>ແຜນງານທີ 1</u>**: ສົ່ງເສີມດ້ານສື່ມວນຊົນ, ປະກອບມີ 3 ໂຄງການ.

**<u>ແຜນງານທີ 2</u>**: ບຳລຸງສ້າງພະນັກງານ ບຸກຄະລາກອນດ້ານຖະແຫຼງຂ່າວສື່ມວນຊົນ, ມີ 4 ໂຄງການ.

**<u>ຍຸດທະສາດທີ 4</u>: ເພີ່ມທະວີການຊອກແຫຼ່ງລາຍຮັບ ດ້ວຍການນຳໃຊ້ທຸກທ່າແຮງທີ່ມີ ໃຫ້ນັບມື້ຫຼາຍຂຶ້ນ, ປັບປຸງກົນໄກ, ນະໂຍບາຍໃນການຄຸ້ມຄອງ ແລະ ການບໍລິຫານທາງດ້ານການເງິນໃຫ້ສອດຄ່ອງ ກັບຄວາມຕ້ອງການໃນການຜະລິດ ແລະ ຖືກຕ້ອງຕາມລະບຽບກົດໝາຍ, ປະກອບມີ 4 ແຜນງານ ແລະ 8 ໂຄງ ການດັ່ງນີ້:**

**<u>ແຜນງານທີ 1</u>**: ເຜີຍແຜ່ຂໍ້ມູນຂ່າວສານແລະໂຄສະນາປະຊາສຳພັນຂອງອົງການທົ່ວປະເທດ,ມີ 2 ໂຄງ ການ.

**<u>ແຜນງານທີ 2</u>**: ຈັດຊຸດຝຶກອົບຮົມ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ພະນັກງານບໍລິຫານຫ້ອງການ ແລະ ການຕະຫຼາດ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 3</u>**: ປະສານງານກັບສະຖານີເຄືອຄ່າຍຢູ່ທ້ອງຖິ່ນເພື່ອຜະລິດການໂຄສະນາສິນຄ້າ,ມີ 2 ໂຄງການ.

**<u>ແຜນງານທີ 4</u>**: ສ້າງນິຕິກຳກ່ຽວກັບການບໍລິຫານ, ຄຸ້ມຄອງການເງິນໃຫ້ສົມຄູ່ກັບແຫຼ່ງລາຍຮັບ ແລະ ຖືກຕ້ອງຕາມລະບຽບກົດໝາຍ ປະກອບມີ 2 ໂຄງການ.

**4.1.4. ເພື່ອບັນລຸຈຸດປະສົງ ໃນການຂະຫຍາຍຂອບເຂດການພົວພັນ, ເຊື່ອມໂຍງກັບເວທີສື່ມວນຊົນສາກົນໃຫ້ນັບມື້ກ້ວາງຂວາງ, ມີຄວາມໝັ້ນຄົງຍືນຍົງ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານ ຂໍ້ມູນຂ່າວສານ, ປະກອບມີ 2 ຍຸດທະສາດ ແລະ 5 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ສ້າງເຄືອຄ່າຍປະສານງານ ເພື່ອເຊື່ອມໂຍງດ້ານການຂ່າວ ດ້ານຖະແຫຼງຂ່າວສື່ມວນຊົນຂອງປະເທດ ໃນລະດັບອານຸພາກພື້ນ, ອາຊຽນ ແລະ ລະດັບໂລກ, ປະກອບມີ 3 ແຜນງານ ແລະ 6 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ສົ່ງຄະນະຜູ້ຕາງໜ້າ ໂທລະພາບແຫ່ງຊາດລາວ ປະຈຳຢູ່ຕ່າງປະເທດ, ມີ 2 ໂຄງ ການ.

**<u>ແຜນງານທີ 2</u>**: ປັບປຸງ ແລະ ພັດທະນາລາຍການ ເພື່ອແລກປ່ຽນກັບລາຍການປະເທດອາຊຽນ ແລະ ບັນດາປະເທດເພື່ອນມິດໃນໂລກ, ປະກອບມີ 3 ໂຄງການ.

**<u>ແຜນງານທີ 3</u>**: ຈັດພະນັກງານຕາມໂຄງການແລກປ່ຽນທຶນຊ່ວຍເຫຼືອຫລ້າ ຈາກຕ່າງປະເທດ, ມີ 1 ໂຄງການ

**<u>ຍຸດທະສາດທີ 2</u>: ຊຸກຍູ້ການຈັດຕັ້ງປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະ ກັນ ກ່ຽວກັບວຽກງານຖະແຫຼງຂ່າວ, ປະກອບມີ 2 ແຜນງານ ແລະ 4 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ຈັດຕັ້ງປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະກັນ ກ່ຽວກັບສື່ມວນຊົນ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ໃນການພັດທະນາບຸກຄະລາກອນ ໃນຂະແໜງສື່ມວນຊົນ ແລະ ວັດທະນະທຳ, ປະກອບມີ 2 ໂຄງການ.

**4.1.5. ເພື່ອບັນລຸຈຸດປະສົງ ພັດທະນາບຸກຄະລາກອນ ໃນຂະແໜງຖະແຫຼງຂ່າວ ໃຫ້ມີທັງປະລິມານ ແລະ ຄຸນນະພາບ, ໂດຍສະເພາະແມ່ນການສົ່ງເສີມບຸກຄະລາກອນໜຸ່ມ ທີ່ມີຄຸນທາດທາງດ້ານການເມືອງໜັກແໜ້ນ ແລະ ມີລະດັບເຕັກນິກວິຊາການສື່ມວນຊົນ ທີ່ສົມຄູ່ກັບຍຸກສະໄໝ, ປະກອບມີ 1 ຍຸດທະສາດ ແລະ 1 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ສ້າງກິດຈະກຳໃນຂົງເຂດວຽກງານຖະແຫຼງຂ່າວ ເພື່ອໂຄສະນາຜະລິດຕະພັນ ຂອງຂະແໜງການທາງພາຍໃນ ແລະ ຕ່າງປະເທດ, ປະກອບມີ 1 ແຜນງານ ແລະ 2 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ຮ່ວມມື ແລະ ແລກປ່ຽນບົດຮຽນກັບອົງການສາກົນ ກ່ຽວກັບການກະຈາຍພາບ ແລະ ສຽງ ໃນຂົງເຂດ ແລະ ສາກົນ, ປະກອບມີ 2 ໂຄງການ.

**4.1.6. ເພື່ອບັນລຸຈຸດປະສົງ ຊຸກຍູ້ການຮ່ວມມື ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ການຮ່ວມມືກັບຕ່າງປະເທດ ໃນການສົ່ງເສີມການລົງທຶນ ໃນວຽກງານຖະແຫຼງຂ່າວໃຫ້ກວ້າງຂວາງ, ປະກອບມີ 2 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ພັດທະນາບຸກຄະລາກອນ ບຸກຄະລາກອນ ໃນຂົງເຂດຖະແຫຼງຂ່າວສື່ມວນຊົນ ຂອບເຂດທົ່ວປະເທດ, ປະກອບມີ 8 ແຜນງານ ແລະ 35 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ສຳຫຼວດຂໍ້ມູນ ເພື່ອປັບປຸງລະດັບຄວາມຮູ້ຄວາມສາມາດດ້ານ ວິທະຍຸໃຫ້ສະຖານີວິທະຍຸທ້ອງຖິ່ນ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ພັດທະນາຄວາມຮູ້ ຄວາມສາມາດດ້ານເຕັກນິກ, ວິຊາການດ້ວຍການບຳລຸງ ແລະ ຍົກລະດັບໃຫ້ແກ່ພະນັກງານເຕັກນິກ-ບັນນາທິການສື່ສິ່ງພິມ, ວິທະຍຸ,ໂທລະພາບ, ນັກຂ່າວ, ສື່ມວນຊົນ ໃນຂອບເຂດທົ່ວປະເທດ, ປະກອບມີ 12 ໂຄງການ.

**<u>ແຜນງານທີ 3</u>**: ເກັບກຳ ແລະ ສ້າງພະນັກງານສືບທອດທີ່ໜຸ່ມແໜ້ນທົ່ວໂທລະພາບແຫ່ງຊາດລາວ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 4</u>**: ແຜນງານການປະສານງານ ລະຫວ່າງ ສະຖາບັນ ແລະ ພາກສ່ວນສະຖາບັນທີ່ກ່ຽວຂ້ອງ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 5</u>**: ປະກອບອຸປະກອນ ການຮຽນ-ການສອນ ໃຫ້ສະຖາບັນການສຶກສາ ໃນຂະແໜງຖະແຫຼງຂ່າວໃຫ້ເປັນລະບົບ ແລະ ທັນສະໄໝ, ປະກອບມີ 1 ໂຄງການ.

**<u>ແຜນງານທີ 6</u>**: ປັບປຸງຫຼັກສູດ ການຮຽນ-ການສອນ, ປະກອບມີ 6 ໂຄງການ.

**<u>ແຜນງານທີ່ 7</u>**: ບຳລຸງພະນັກງານບໍລິຫານ, ນັກຂ່າວໃນສຳນັກງານອົງການ ໄລຍະສັ້ນ ແລະກໍ່ສ້າງບຸກຄະລາກອນໜຸ່ມແໜ້ນທາງດ້ານວິຊາການ ໄລຍະສັ້ນ ປະກອບມີ 8 ໂຄງການ.

**<u>ແຜນງານທີ 8</u>**: ຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ໃນການພັດທະນາບຸກຄະລາກອນ ໃນຂະແໜງສື່ມວນຊົນ, ປະກອບມີ 2 ໂຄງການ.

**<u>ຍຸດທະສາດທີ 2</u>: ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານ ທາງດ້ານຖະແຫຼງຂ່າວ, ປະກອບມີ 2 ແຜນງານ ແລະ 10 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ແຜນງານພັດທະນາໂຄງລ່າງພື້ນຖານສຳນັກງານ, ຫ້ອງການສື່ມວນຊົນ, ມີ 7 ໂຄງການ.

**<u>ແຜນງານທີ 2</u>**: ແຜນງານພັດທະນາໂຄງລ່າງພື້ນຖານ ທາງດ້ານເຕັກນິກ, ອຸປະກອນຮັບໃຊ້ສື່ມວນຊົນ, ປະກອບ ມີ 3 ໂຄງການ.

**4.1.7. ເພື່ອບັນລຸຈຸດປະສົງ ຫັນການຄຸ້ມຄອງສື່ມວນຊົນໃຫ້ມີຄວາມເຂັ້ມແຂງ ແລະ ເປັນທັນສະໄໝ, ປະກອບມີ 4 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ສ້າງເຄືອຄ່າຍປະສານງານສື່ມວນຊົນ ລະຫວ່າງ ພາກລັດ-ເອກະຊົນ ແລະ ເຄືອຄ່າຍປະສານງານ ລະຫວ່າງ ສື່ມວນຊົນພາຍໃນ ກັບຕ່າງປະເທດ ເພື່ອໂຄສະນາດ້ານຂໍ້ມູນຂ່າວສານ ໃຫ້ກວ້າງຂວາງ ແລະ ດຶງດູດການຊ່ວຍເຫຼືອຈາກຕ່າງປະເທດ, ປະກອບມີ 1 ແຜນງານ ແລະ 2 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ການສົ່ງເສີມການຮ່ວມມືກັບສາກົນ ທີ່ມີການເຊັນສັນຍາຮ່ວມມືແລ້ວ (MOU) ວິທະຍຸຫວຽດນາມ, ວິທະຍຸສາກົນແຫ່ງປະເທດຈີນ, ວິທະຍຸສາກົນຝຣັ່ງ, ວິທະຍຸອົສຕຣາລີ, ວິທະຍຸກຳປູເຈັຍ ແລະ ກົມປະຊາສຳພັນ ຂອງຣາຊອານາຈັກໄທ, ປະກອບມີ 2 ໂຄງການ.

**<u>ຍຸດທະສາດທີ 2</u>: ສ້າງເຄືອຄ່າຍປະສານງານ ດ້ານສື່ມວນຊົນ ຢູ່ໃນແຕ່ລະຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ, ປະກອບມີ 2 ແຜນງານ ແລະ 7 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ປັບປຸງລະບົບຂອດປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ການປັບປຸງ ແລະ ພັດທະນາລາຍການພາກພາສາຕ່າງປະເທດ ວິທະຍຸກະຈາຍສຽງແຫ່ງຊາດ ແລະ ຂະຫຍາຍພາກຂ່າວພາສາຕ່າງປະເທດ ຢູ່ບັນດາແຂວງທີ່ມີທ່າແຮງ ປະກອບ ມີ 5 ໂຄງການ.

**<u>ຍຸດທະສາດທີ 3</u>: ປັບປຸງບັນດາກົດໝາຍ ແລະ ນິຕິກຳ ໃນຂົງເຂດວຽກງານຖະແຫຼງຂ່າວ ທີ່ມີແລ້ວໃຫ້ມີຄວາມຮັດກຸມ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນແຕ່ລະໄລຍະ,ຄົ້ນຄວ້າສ້າງກົດໝາຍ ແລະ ນິຕິກຳ ທີ່ບໍ່ທັນມີໃນຂົງເຂດວຽກງານຖະແຫຼງຂ່າວ ໃຫ້ຄົບຖ້ວນ, ປະກອບມີ 2 ແຜນງານ ແລະ 14 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ສ້າງນິຕິກຳດ້ານສື່ມວນຊົນ, ປະກອບມີ 12 ໂຄງການ.

**<u>ແຜນງານທີ 2</u>**: ປັບປຸງ ແລະ ສ້າງນິຕິກຳໃໝ່ກ່ຽວກັບການບໍລິຫານ ຄຸ້ມຄອງທາງດ້ານການເງິນ ໃຫ້ສົມຄູ່ກັບແຫຼ່ງລາຍຮັບ ແລະ ຖືກຕ້ອງຕາມກົດໝາຍບ້ານເມືອງ, ປະກອບມີ 2 ໂຄງການ.

**<u>ຍຸດທະສາດທີ 4</u>: ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳ ໃນຂົງເຂດວຽກງານຖະແຫຼງຂ່າວ ໃຫ້ທົ່ວເຖິງທັງພາຍໃນ ແລະ ຕ່າງປະເທດ, ປະກອບມີ 1 ແຜນງານ ແລະ 10 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ເຜີຍແຜ່ນິຕິກຳດ້ານສື່ມວນຊົນ, ປະກອບມີ 10 ໂຄງການ.

**4.3. <u>ບັນດາແຜນງານ ແລະ ໂຄງການ ວຽກງານວັດທະນະທຳ</u>.**

ເພື່ອບັນລຸເປົ້າໝາຍໃນການອະນຸລັກ, ຮັກສາ, ສືບທອດ ວັດທະນະທຳອັນດີງາມຂອງຊາດ ຈຶ່ງໄດ້ຄົ້ນຄວ້າສັງລວມບັນດາແຜນງານ ແລະ ໂຄງການໃຫ້ສອດຄ່ອງກັບ 7 ຈຸດປະສົງ ທີ່ກຳນົດໄວ້ລະອຽດດັ່ງນີ້:

**4.2.1. ເພື່ອບັນລຸຈຸດປະສົງ ສືບຕໍ່ສົ່ງເສີມການອະນຸລັກ, ປົກປັກຮັກສາ, ຟື້ນຟູສືບທອດ, ເສີມຂະຫຍາຍ ມູນເຊື້ອ ແລະ ຄຸນຄ່າມໍລະດົກທາງດ້ານວັດທະນະທຳ ທີ່ເປັນເອກະລັກ ອັນດີງາມຂອງຊາດ ໃຫ້ມີຄວາມຍືນຍົງ, ປະກອບ ມີ 6 ຍຸດທະສາດ ແລະ 8 ແຜນງານດັ່ງນີ້:**

**<u>ຍຸດທະສາດທີ 1</u>: ປູກຈິດສຳນຶກໃຫ້ທຸກຄົນໃນສັງຄົມຮັບຮູ້, ເຂົ້າໃຈຄວາມໝາຍ ຄວາມສຳຄັນວຽກງານ ວັດທະນະທຳ ດ້ານຕ່າງໆ, ປະກອບມີ 1 ແຜນງານ ແລະ 55 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ປູກຈິດສຳນຶກ ແລະ ເຄື່ອນໄຫວກິດຈະກຳວັດທະນະທຳ ເພື່ອປູກຈິດສຳນຶກ ໃຫ້ທຸກຊັ້ນຄົນ ໃນສັງຄົມຮັບຮູ້, ເຂົ້າໃຈຄວາມໝາຍຄວາມສຳຄັນ ຂອງວຽກງານວັດທະນະທຳດ້ານຕ່າງໆ, ມີ 55 ໂຄງການ.

**<u>ຍຸດທະສາດທີ 2</u>: ສຶກສາຄົ້ນຄວ້າວິໄຈ, ອະນຸລັກຮັກສາ ແລະ ວາງແຜນພັດທະນາ, ຄຸ້ມຄອງວັດທະນະທຳລາວ ທຸກຂະແໜງການໃຫ້ເປັນລະບົບ, ປະກອບມີ 2 ແຜນງານ ແລະ 70 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ສຶກສາຄົ້ນຄວ້າວິໄຈ, ຟື້ນຟູ, ອະນຸລັກຮັກສາ ແລະ ສືບທອດເສີມຂະຫຍາຍມູນເຊື້ອມໍລະ ດົກ ອັນລ້ຳຄ່າທາງດ້ານວັດທະນະທຳ ຢູ່ທົ່ວປະເທດ, ປະກອບ ມີ 63 ໂຄງການ.

**<u>ແຜນງານທີ 2</u>**: ວາງແຜນພັດທະນາ, ຄຸ້ມຄອງວັດທະນະທຳລາວ ໃຫ້ເປັນລະບົບ, ປະກອບມີ 7 ໂຄງການ.

**<u>ຍຸດທະສາດທີ 3</u>: ສ້າງຖານຂໍ້ມູນ, ສະຖິຕິທາງດ້ານວັດທະນະທຳປະເພດຕ່າງໆ ໄວ້ເປັນຄັງສາງ ມໍລະດົກທາງ ດ້ານວັດທະນະທຳ ຂອງຊາດ, ປະກອບມີ 1 ແຜນງານ ແລະ 30 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ເກັບກຳສະຖິຕິ ແລະ ສ້າງຖານຂໍ້ມູນປົກປັກຮັກສາ ມໍລະດົກທາງດ້ານວັດທະນະທຳ ແຕ່ລະ ປະເພດ, ປະກອບມີ 30 ໂຄງການ.

**<u>ຍຸດທະສາດທີ 4</u>: ຮ່ວມມື, ປະສານງານຢ່າງແຂງແຮງ ລະຫວ່າງ ພາກລັດ ແລະ ເອກະຊົນ ໃນການເຄື່ອນ ໄຫວ ວຽກງານວັດທະນະທຳໃຫ້ສອດຄ່ອງ ແລະ ທັນໄປສູ່ທັນສະໄໝ, ປະກອບມີ 1 ແຜນງານ ແລະ 20 ໂຄງການ ຄືດັ່ງນີ້:**

**<u>ແຜນງານທີ 1</u>**: ກຳນົດນະໂຍບາຍ ຊຸກຍູ້ການຮ່ວມມືປະສານງານ ລະຫວ່າງພາກລັດ ແລະ ເອກະຊົນໃນການ ເຄື່ອນໄວວຽກງານວັດທະນະທຳ ໃຫ້ສອດຄ່ອງ ແລະ ທັນໄປສູ່ທັນສະໄໝ ປະກອບມີ 20 ໂຄງການ.

**<u>ຍຸດທະສາດທີ 5</u>: ສ້າງ ແລະພັດທະນາບ້ານວັດທະນະທຳ ໃຫ້ເປັນລະບົບ ແລະ ໄດ້ຕາມມາດຖານ,ປະກອບ ມີ 2 ແຜນງານ ແລະ 27 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ສ້າງ ແລະ ພັດທະນາວຽກງານວັດທະນະທຳ ໃນຂະແໜງການຕ່າງໆ ໃນຂອບເຂດທົ່ວປະ ເທດ, ປະກອບມີ 20 ໂຄງການ.

**<u>ແຜນງານທີ 2</u>**: ສ້າງ ແລະ ຍົກລະດັບບ້ານວັດທະນະທຳ, ຕອບສະໜອງສິ່ງອຳນວຍຄວາມສະດວກ ເພື່ອຊຸກຍູ້ ສົ່ງເສີມຄອບຄົວ, ບ້ານ, ກຸ່ມບ້ານ ແລະ ເມືອງວັດທະນະທຳ ໃນຂອບເຂດທົ່ວປະເທດ, ປະກອບມີ 7 ໂຄງການ.

**<u>ຍຸດທະສາດທີ 6</u>: ຊຸກຍູ້ ແລະ ສ້າງເງື່ອນໄຂ ໃຫ້ວັດທະນະທຳທາງດ້ານວັດຖຸ ແລະ ບໍ່ເປັນວັດຖຸ ລະດັບທ້ອງຖິ່ນກ້າວໄປສູ່ການຈົດທະບຽນ ມໍລະດົກແຫ່ງຊາດ ແລະ ສ້າງເງື່ອນໄຂເພື່ອນຳສະເໜີ ເຂົ້າເປັນມໍລະດົກໂລກ, ປະກອບມີ 1 ແຜນງານ ແລະ 21 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>:** ຄົ້ນຄວ້ານຳສະເໜີມໍລະດົກວັດທະນະທຳ ລະດັບທ້ອງຖິ່ນທີ່ເປັນວັດຖຸ ແລະ ບໍ່ເປັນວັດຖຸໃຫ້ກ້າວສູ່ມໍລະດົກວັດທະນະທຳແຫ່ງຊາດ ແລະ ຄົ້ນຄວ້ານຳສະເໜີມໍລະດົກ ວັດທະນະທຳລະດັບຊາດ ເປັນມໍລະດົກໂລກ ປະກອບມີ 21 ໂຄງການ.

**4.2.2. ເພື່ອບັນລຸຈຸດປະສົງ ໃນການສົ່ງເສີມ, ພັດທະນາອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈ ຂອງສັງຄົມ, ພ້ອມທັງຮັບເອົາ ຄຸນຄ່າວັດທະນະທຳ ທີ່ກ້າວໜ້າຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ ສາມາດເຊື່ອມໂຍງກັບສາກົນ, ປະກອບມີ 3 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ເປີດກວ້າງ ການຮ່ວມມືແລກປ່ຽນວັດທະນະທຳ ກັບພາກພື້ນ ແລະ ສາກົນ, ປະກອບມີ 2 ແຜນງານ ແລະ 67 ໂຄງການ ດັ່ງນີ້ :**

**<u>ແຜນງານທີ 1</u>:**

ການຮ່ວມມືແລກປ່ຽນວັດທະນະທຳກັບບັນດາປະເທດເພື່ອນມິດຍຸດທະສາດ, ປະເທດອາ ຊຽນ ແລະ ສາກົນ ປະກອບມີ 64 ໂຄງການ.

**<u>ແຜນງານທີ່ 2</u>:** ປັບປຸງພັດທະນາ ສິລະປະການສະແດງໃຫ້ມີຫຼາກຫຼາຍສີສັນທັນສະໄໝ ແລະ ສາມາດເຊື່ອມໂຍງກັບສາກົນ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 2</u>: ປັບປຸງ, ສົ່ງເສີມ ແລະ ຄຸ້ມຄອງວັດທະນະທຳ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ຂອງທ້ອງຖິ່ນ ແລະ ຂອງຊາດ ປະກອບມີ 1 ແຜນງານ ແລະ 3 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>:** ສ້າງ ແລະ ປັບປຸງຮ່າງນະໂຍບາຍ ວ່າດ້ວຍການອະນຸລັກພັດທະນາ ແລະ ສົ່ງເສີມວຽກງານວັດທະນະທຳ ຂະແໜງການຕ່າງໆ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 3</u>: ສ້າງ ແລະ ສົ່ງເສີມສັງຄົມການອ່ານ ໃຫ້ເຂົ້າຢູ່ໃນຊີວິດປະຈຳວັນ ຂອງຄົນລາວ, ປະກອບມີ 1 ແຜນງານ ແລະ 54 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>:** ຄົ້ນຄວ້າ, ປະດິດແຕ່ງ, ຮຽບຮຽງ, ແປປຶ້ມ, ຈັດສົ່ງພິມຕ່າງໆ ທາງດ້ານວັດທະນະທຳ ແລະ ສ້າງກິດຈະກຳໂຄສະນາເຜີຍແຜ່ວຽກງານສົ່ງເສີມການອ່ານ ຢູ່ສະຖາບັນການສຶກສາ ແລະ ຊຸມຊົນ ໃນຂອບເຂດທົ່ວປະເທດ, ປະກອບມີ 54 ໂຄງການ.

**4.2.3. ເພື່ອບັນລຸຈຸດປະສົງ ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມ ຫຼາກຫຼາຍ ແລະ ມີຄຸນນະພາບສູງ ກ້າວໄປເຖິງການສ້າງເປັນອຸດສາຫະກຳວັດທະນະທຳໃນອະນາຄົດ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ ສັງຄົມຂອງຊາດ ຢ່າງຍືນຍົງ, ປະກອບມີ 4 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ສ້າງ ແລະ ປັບປຸງຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍ ປະກອບ ມີ 2 ແຜນງານ ແລະ 17 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ລິງຊຸກຍູ້, ຊີ້ນຳຂະບວນການເຄື່ອນໄຫວວັດທະນະທຳຂະແໜງການຕ່າງໆ ຢູ່ທ້ອງຖິ່ນ ໃຫ້ມີຄວາມອຸດົມຮັ່ງມີ, ຫຼາຍຮູບ, ຫຼາຍສີ, ປະກອບມີ 3 ໂຄງການ.

**<u>ແຜນງານທີ 2</u>**: ຍົກລະດັບຂີດຄວາມສາມາດ ຂອງພະນັກງານຄຸ້ມຄອງນຳພາ, ວິຊາການທາງດ້ານວັດທະນະທຳຂະແໜງຕ່າງໆ ແລະ ປະກອບອຸປະກອນອຳນວຍຄວາມສະດວກ ໃນການປັບປຸງຜະລິດຕະພັນວັດທະນະທຳປະເພດຕ່າງໆ, ປະກອບມີ 14 ໂຄງການ.

**<u>ຍຸດທະສາດທີ 2</u>: ເປີດກວ້າງ ແລະ ສົ່ງເສີມຕະຫຼາດຜະລິດຕະພັນວັດທະນະທຳ ຢູ່ພາຍໃນ ແລະ ຕ່າງ ປະເທດ, ສ້າງຄວາມເຂັ້ມແຂງໃຫ້ຂະແໜງວັດທະນະທຳ, ສາມາດກຸ້ມຕົນເອງເທື່ອລະກ້າວ, ປະກອບມີ 2 ແຜນງານ ແລະ 26 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ຊຸກຍູ້, ການຜະລິດຜະລິດຕະພັນ ທາງດ້ານວັດທະນະທຳໃຫ້ເປັນສິນຄ້າ, ໂຄສະນາ ແລະ ຈຳໜ່າຍຜະລິດຕະພັນທາງດ້ານວັດທະນະທຳ ຢູ່ພາຍໃນ ແລະ ຕ່າງປະເທດ, ປະກອບມີ 22 ໂຄງການ.

**<u>ແຜນງານທີ 2</u>**: ສ້າງກອງທຶນ ຂະແໜງການວັດທະນະທຳ, ປະກອບມີ 4 ໂຄງການ.

**<u>ຍຸດທະສາດທີ 3</u>: ສົ່ງເສີມການປະດິດຄິດແຕ່ງທາງດ້ານວັດທະນະທຳ ແລະ ສະໜັບສະໜູນ ຫົວຄິດປະດິດສ້າງທາງດ້ານພູມປັນຍາຊາວບ້ານ (ທ້ອງຖິ່ນ) ທາງດ້ານວັດທະນະທຳ, ປະກອບມີ 1 ແຜນງານ ແລະ 17 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ຂຸດຄົ້ນສົ່ງເສີມພູມປັນຍາຊາວບ້ານ, ສົ່ງເສີມການປະດິດຄິດແຕ່ງສິລະປະ, ວັນນະກຳພື້ນບ້ານ ແລະ ສະໄໝໃໝ່, ປະກອບມີ 17 ໂຄງການ:

**<u>ຍຸດທະສາດທີ 4</u>: ສ້າງໜຶ່ງເມືອງ ໜຶ່ງຜະລິດຕະພັນ, ປະກອບມີ 1 ແຜນງານ ແລະ 8 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ສຶກສາທ່າແຮງ ຄວາມອາດສາມາດ ຂອງເມືອງຕ່າງໆ ໃນຂອບເຂດທົ່ວປະເທດ ເພື່ອຊຸກຍູ້ສົ່ງເສີມການສ້າງຜະລິດຕະພັນທາງດ້ານວັດທະນະທຳໜຶ່ງເມືອງ ໜຶ່ງຜະລິດຕະພັນ, ປະກອບມີ 8 ໂຄງການ.

**4.2.4. ເພື່ອບັນລຸຈຸດປະສົງໂຄສະນາ ແລະ ເຜີຍແຜ່ວັດທະນະທຳທີ່ດີງາມຂອງຊາດ ອອກສູ່ສັງຄົມທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທຳ ທີ່ເປັນໄພຕໍ່ສັງຄົມມີ 3 ຍຸດທະສາດ 3 ແຜນງານ ດັ່ງນີ້.**

**<u>ຍຸດທະສາດທີ 1</u>: ໂຄສະນາເຜີຍແຜ່ວຽກງານວັດທະນະທຳຂອງຊາດ ຜ່ານບັນດາພາຫະນະສື່ ມວນຊົນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ປະກອບມີ 1 ແຜນງານ ແລະ 51 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ຍົກລະດັບທາງດ້ານເຕັກນິກ ແລະ ວິຊາການ ເພື່ອໂຄສະນາເຜີຍແຜ່ວຽກງານວັດທະນະທຳຂອງຊາດ ຜ່ານບັນດາພາຫະນະສື່ມວນຊົນ ປະເພດຕ່າງໆ ຢູ່ພາຍໃນ, ປະກອບມີ 51 ໂຄງການ.

**<u>ຍຸດທະສາດທີ 2</u>: ເຂົ້າຮ່ວມ ແລະ ຈັດງານວາງສະແດງວາງວາລະສານ, ປຶ້ມ, ສິ່ງພິມ, ຮູບແຕ້ມ ຈິດຕະກຳ, ຮູບເງົາ, ວີດີໂອ...ແລະ ຜະລິດຕະພັນວັດທະນະທຳ ຂະແໜງການຕ່າງໆ ໃນໂອກາດຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ປະກອບດ້ວຍ 1 ແຜນງານ ແລະ 19 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ເຂົ້າຮ່ວມການວາງສະແດງຜະລິດຕະພັນວັດທະນະທຳ ແລະ ຈັດກິດຈະກຳ, ງານກວດສອບແຂ່ງຂັນຊີງລາງວັນວັດທະນະທຳ, ການອ່ານ ແລະ ຫໍສະໝຸດດີເດັ່ນ ປະກອບມີ 19 ໂຄງການ.

**<u>ຍຸດທະສາດທີ 3</u>: ສົມທົບກັບທ້ອງຖິ່ນ ແລະ ພາກທຸລະກິດຈັດງານບຸນເທດສະການ, ງານບຸນປະເພນີທີ່ສຳຄັນປະຈຳທ້ອງຖິ່ນ ເພື່ອໂຄສະນາການອະນຸລັກຮັກສາວັດທະນະທຳ, ປະກອບ 1 ມີແຜນງານ ແລະ 25 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ຈັດງານເທດສະການ, ງານບຸນປະເພນີທີ່ສຳຄັນປະຈຳທ້ອງຖິ່ນ,ຈັດງານວາງສະແດງຜະລິດຕະພັນວັດທະນະທຳ, ງານມະຫາກຳວັດທະນະທຳເດັກ ເພື່ອໂຄສະນາ ແລະ ອະນຸລັກຮັກສາວັດທະນະທຳລາວ, ປະກອບ ມີ 25 ໂຄງການ.

**4.2.5. ເພື່ອພັດທະນາບຸກຄະລາກອນ ໃນຂົງເຂດວັດທະນະທຳໃຫ້ມີຄວາມເຂັ້ມແຂງ ທັງປະລິມານ ແລະ ຄຸນນະພາບ, ປະກອບມີ 6 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ຍົກລະດັບຂີດຄວາມສາມາດ ຂອງພະນັກງານນຳພາ, ສ້າງ ແລະ ພັດທະນາບຸກຄະລາກອນວິຊາການທາງດ້ານວັດທະນະທຳ ໃຫ້ມີຄວາມຮູ້ ຄວາມສາມາດ ແລະ ຊຳນິຊຳນານ, ປະກອບ ມີ 2 ແຜນງານ ແລະ 70 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ຍົກລະດັບຂີດຄວາມສາມາດ, ສ້າງຄວາມເຂັ້ມແຂງ ທາງດ້ານ ຈັດຕັ້ງ-ບໍລິຫານ ແລະ ວິຊາການ ວຽກງານວັດທະນະທຳ ຂະແໜງການຕ່າງໆ, ປະກອບມີ 42 ໂຄງການ.

**<u>ແຜນງານທີ 2</u>**: ຍົກລະດັບຂີດຄວາມສາມາດດ້ານວິຊາການ ທາງດ້ານວັດທະນະທຳ ແລະ ການຮ່ວມມືສາກົນ ປະກອບມີ 28 ໂຄງການ.

**<u>ຍຸດທະສາດທີ 2</u>: ໄປທັດສະນະສຶກສາ ແລະ ແລກປ່ຽນບົດຮຽນວຽກງານວັດທະນະທຳທັງພາຍໃນ ແລະ ຕ່າງປະເທດ, ປະກອບມີ 1 ແຜນງານ ແລະ 23 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນວຽກງານວັດທະນະທຳ ຂອງຂະແໜງການຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ, ປະກອບມີ 23 ໂຄງການຄືດັ່ງນີ້.

**<u>ຍຸດທະສາດທີ 3</u>: ສົ່ງເສີມບົດບາດ, ຍົກສູງປະສິດທິພາບໃນການສິດສອນ ແລະ ພັດທະນາບຸກຄະລາກອນຄູສອນດ້ານວັດທະນະທຳ, ປະກອບມີ 1 ແຜນງານ ແລະ 27 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ຍົກສູງປະສິດທິພາບໃນການສິດສອນ ແລະ ພັດທະນາບຸກຄະລາກອນວຽກງານວັດທະນະ ທຳ ຂະແໜງການຕ່າງໆ, ປະກອບມີ 27 ໂຄງການ.

**<u>ຍຸດທະສາດທີ 4</u>: ສ້າງ ແລະ ປັບປຸງຫຼັກສູດ ການຮຽນ-ການສອນ ດ້ານວັດທະນະທຳ ໃນລະບົບຊັ້ນສູງ ປະລິນຍາຕີ, ປະລິນຍາໂທ ແລະ ຫຼັກສູດຝຶກອົບຮົມໄລຍະສັ້ນ ປະກອບມີ 2 ແຜນງານ ແລະ 52 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ສ້າງ ແລະ ປັບປຸງຫຼັກສູດ ການຮຽນ-ການສອນ ໄລຍະຍາວ ແລະ ໄລຍະສັ້ນ ໃນຂົງເຂດວຽກງານວັດທະນະທຳ 45 ໂຄງການ.

<u>ແຜນງານທີ 2</u>: ໄປຢ້ຽມຢາມແລກປ່ຽນບົດຮຽນ ກັບບັນດາປະເທດເພື່ອນມິດຍຸດທະສາດ ເພື່ອສ້າງ ແລະ ປັບປຸງຫຼັກສູດການຝຶກອົບຮົມໄລຍະສັ້ນ ແລະຍາວ ດ້ານວັດທະນະທຳຂະແໜງການຕ່າງໆ, ມີ 7 ໂຄງການ.

**<u>ຍຸດທະສາດທີ 5</u>: ສົ່ງເສີມບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງສັງຄົມ ໃນການສ້າງຄວາມເຂັ້ມ ແຂງ ທາງດ້ານ ວັດທະນະທຳ, ປະກອບມີ 1 ແຜນງານ ແລະ 5 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ບຳລຸງສ້າງບຸກຄະລາກອນເພດຍິງ ຢູ່ພາຍໃນ ແລະ ຕ່າງປະເທດ ທັງໄລຍະສັ້ນ ແລະ ຍາວ, ປະກອບມີ 5 ໂຄງການ.

**<u>ຍຸດທະສາດທີ 6</u>: ສົ່ງເສີມ ແລະ ພັດທະນາຜູ້ສືບທອດທີ່ມີພອນສະຫວັນບົ່ມຊ້ອນດ້ານ ວັດທະນະທຳ ໃນກຸ່ມ ຊາວໜຸ່ມ ນັກຮຽນ, ນັກສຶກສາ, ປັນຍາຊົນ, ປະກອບມີ 1 ແຜນງານ ແລະ 25 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ສ້າງ, ສົ່ງເສີມ ແລະ ພັດທະນາຜູ້ສືບທອດ ທີ່ມີພອນສະຫວັນດ້ານວັດທະນະທຳ ຂະແໜງ ການຕ່າງໆ, ປະກອບມີ 25 ໂຄງການ.

**4.2.6. ເພື່ອບັນລຸຈຸດປະສົງໃນການສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ໃນຂະແໜງວັດທະນະທຳ ໃຫ້ສົມຄູ່ ກັບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມມີ 2 ຍຸດທະສາດ 3 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງດ້ານວັດທະນະທຳໃຫ້ມີຄວາມເຂັ້ມແຂງ, ເປັນລະບົບ ຄົບ ຊຸດ ນັບແຕ່ສູນກາງຮອດທ້ອງຖິ່ນ, ປະກອບມີ 1 ແຜນງານ ແລະ 75 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ປັບປຸງ ແລະ ສ້າງພື້ນຖານໂຄງລ່າງ ຂອງວຽກງານຂະແໜງວັດທະນະທຳດ້ານຕ່າງໆ,ປະກອບ ມີ 75 ໂຄງການ.

**<u>ຍຸດທະສາດທີ 2</u>: ປະກອບວັດຖຸ ອຸປະກອນເຕັກນິກທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ແກ່ ການເຄື່ອນໄຫວວຽກງານວິຊາສະເພາະ ແລະ ຄຸ້ມຄອງບໍລິຫານດ້ານວັດທະນະທຳ ໃຫ້ແກ່ຂະແໜງການວັດທະນະ ທຳ, ປະກອບມີ 2 ແຜນງານ ແລະ 98 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ປະກອບ ແລະ ຍົກລະດັບວັດຖຸ ອຸປະກອນເຕັກນິກທັນສະໄໝ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວ ວຽກງານວິຊາສະເພາະ ແລະ ຄຸ້ມຄອງບໍລິຫານດ້ານວັດທະນະທຳ ໃຫ້ແກ່ຂະແໜງການ ວັດທະນະທຳດ້ານຕ່າງໆ, ປະກອບມີ 87 ໂຄງການ.

<u>ແຜນງານທີ 2</u>: ການປັບປຸງ ແລະ ພັດທະນາຖານຂໍ້ມູນ ເພື່ອຮັບປະກັນການເກັບຮັກສາຂໍ້ມູນ ດ້ານວັດທະ ນະ ທຳ ຂະແໜງການຕ່າງໆ, ປະກອບມີ 11 ໂຄງການ.

**4.2.7. ເພື່ອບັນລຸຈຸດປະສົງການຄຸ້ມຄອງບໍລິຫານ, ຕິດຕາມ ກວດກາ ແລະ ປະເມີນຜົນ ການປະຕິບັດວຽກ ງານໃນຂົງເຂດວັດທະນະທຳ ຢ່າງເປັນລະບົບຕໍ່ເນື່ອງມີ 2 ຍຸດທະສາດ 3 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກຳໃນຂົງເຂດວັດທະນະທຳ ໃຫ້ຄົບຖ້ວນ, ປະກອບມີ 1 ແຜນງານ ແລະ 47 ໂຄງການ ດັ່ງນີ້:**

<u>ແຜນງານທີ່ 1</u>: ປັບປຸງ ແລະ ສ້າງບັນດານິຕິກຳກ່ຽວກັບການຄຸ້ມຄອງ ວຽກງານວັດທະນະທຳ ຂອງແຕ່ລະຂະ ແໜງການ, ປະກອບມີ 47 ໂຄງການ.

**<u>ຍຸດທະສາດທີ 2</u>: ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳ ໃນຂົງເຂດວັດທະນະທຳ ທຸກຂະແໜງການ ໃຫ້ທົ່ວເຖິງ ປະກອບມີ 2 ແຜນງານ ແລະ 62 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>:** ເຜີຍແຜ່ ບັນດານິຕິກຳກ່ຽວກັບການ ຄຸ້ມຄອງວຽກງານວັດທະນະທຳ ແລະ ຕິດຕາມກວດກາປະເມີນຜົນການການຄຸ້ມຄອງ ວຽກງານວັດທະນະທຳ ໃນຂອບເຂດທົ່ວປະເທດ, ປະກອບມີ 57 ໂຄງການ.

**<u>ແຜນງານທີ 2</u>:** ປະຕິບັດນະໂຍບາຍ ຊຸກຍູ້ຖັນແຖວພະນັກງານນັກວິຊາການ ເຄື່ອນໄຫວວຽກງານຂົງເຂດວັດທະນະທຳ ຂອບເຂດທົ່ວປະເທດ, ປະກອບມີ 5 ໂຄງການ.

4.3. <u>ບັນດາແຜນງານ ແລະ ໂຄງການພັດທະນາວຽກງານທ່ອງທ່ຽວ ຂອງ ສປປ ລາວ</u>.

**ເພື່ອບັນລຸເປົ້າໝາຍໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 2016-2020 ໃຫ້ສຳເລັດຈຶ່ງໄດ້ຄົ້ນຄວ້າສັງລວມບັນດາແຜນງານ ແລະ ໂຄງການໃຫ້ສອດຄ່ອງກັບ 13 ຈຸດປະສົງ ທີ່ກຳນົດໄວ້ ຊຶ່ງມີລາຍລະອຽດດັ່ງນີ້:**

**4.3.1. ເພື່ອບັນລຸຈຸດປະສົງໃນການພັດທະນາການທ່ອງທ່ຽວລາວ ໃຫ້ມີຄວາມຍືນຍົງຕາມທິດສົ່ງເສີມການທ່ອງທ່ຽວທຳມະຊາດ, ການທ່ອງທ່ຽວວັດທະນະທຳ ແລະ ທ່ອງທ່ຽວປະຫວັດສາດ, ປະກອບມີ 6 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ປັບປຸງແຜນຍຸດທະສາດ ພັດທະນາການທ່ອງທ່ຽວຂອງ ສປປ ລາວ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ຂອງ ສປປ ລາວ ແລະ ສາມາດເຊື່ອມໂຍງກັບສາກົນໄດ້ ປະກອບມີ 1 ແຜນງານ ແລະ 22 ໂຄງການຄືດັ່ງນີ້:**

**<u>ແຜນງານທີ 1</u>:** ປັບປຸງແຜນຍຸດທະສາດພັດທະນາການທ່ອງທ່ຽວ ຂອງ ສປປ ລາວ ແລະ 18 ແຂວງທົ່ວປະເທດ, ປະກອບມີ 22 ໂຄງການ.

**<u>ຍຸດທະສາດທີ 2</u>: ການຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການພັດທະນາການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ປະກອບມີ 1 ແຜນງານ ແລະ 7 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>:** ການພັດທະນາຮູບແບບ ແລະ ການເກັບກຳຂໍ້ມູນເພື່ອປະເມີນຜົນ ຜົນກະທົບຈາກການທ່ອງທ່ຽວ, ຢູ່ບັນດາແຂວງຕ່າງໆ ໃນ ສປປ ລາວ ປະກອບມີ 7 ໂຄງການ.

**<u>ຍຸດທະສາດທີ 3</u>: ສ້າງບົດວິໄຈທາງດ້ານການທ່ອງທ່ຽວ ເພື່ອເປັນບ່ອນອີງ ແລະ ຕອບສະໜອງຂໍ້ມູນທີ່ມີເນື້ອໃນຄົບຖ້ວນ ແລະ ຊັດເຈນ ກ່ຽວກັບວຽກງານພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ຂອງ ສປປ ລາວ, ປະກອບມີ 1 ແຜນງານ ແລະ 13 ໂຄງການດັ່ງນີ້.**

**<u>ແຜນງານທີ 1</u>:** ສ້າງບົດວິໄຈ ດ້ານຜົນກະທົບ ຂອງການທ່ອງທ່ຽວ, ການພັດທະນາຕົວເມືອງທ່ອງທ່ຽວ, ດ້ານການທ່ອງທ່ຽວເຊື່ອມຕໍ່ບັນດາ ປະເທດອະນຸພາກພື້ນແມ່ນ້ຳຂອງ ປະກອບມີ 13 ໂຄງການ.

**<u>ຍຸດທະສາດທີ 4</u>: ຈັດກິດຈະກຳສົ່ງເສີມການທ່ອງທ່ຽວ ທີ່ຕິດພັນກັບການໂຄສະນາການທ່ອງທ່ຽວ ທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ໃຫ້ສາມາດເຂົ້າເຖິງກຸ່ມຕະຫຼາດ ນັກທ່ອງທ່ຽວ ທີ່ເປັນເປົ້າໝາຍທັງຢູ່ພາຍໃນ ແລະ ຕ່າງປະເທດ, ປະກອບມີ 2 ແຜນງານ ແລະ 46 ໂຄງການຄືດັ່ງນີ້:**

**<u>ແຜນງານທີ 1</u>:** ຈັດທັດສະນະ ສຶກສາຢ້ຽມຢາມແຫຼ່ງທ່ອງທ່ຽວ (FAM TRIP), ປະກອບມີ 5 ໂຄງການ.

**<u>ແຜນງານທີ 2</u>:** ໂຄສະນາຂາຍຜະລິດຕະພັນການທ່ອງທ່ຽວ ໂດຍການຈັດ Roadshow ຢູ່ຕ່າງປະເທດ ຈັດກິດຈະກຳ ແລະ ເຂົ້າຮ່ວມງານວາງສະແດງ ຢູ່ຕ່າງປະເທດ ປະກອບມີ 41 ໂຄງການ.

**<u>ຍຸດທະສາດທີ 5</u>: ສົ່ງເສີມການອະນຸລັກ, ນຳໃຊ້ ແລະ ພັດທະນາຊັບພະຍາກອນການທ່ອງທ່ຽວ ຢ່າງປະຢັດ, ມີປະສິດທິພາບ ແລະ ເປັນມິດກັບສິ່ງແວດລ້ອມ ປະກອບມີ 1 ແຜນງານ ແລະ 8 ໂຄງການດັ່ງນີ້:**

<u>**ແຜນງານທີ 1**</u>: ການຍົກລະດັບຂີດຄວາມສາມາດ ແລະ ການມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງ ທັງພາກ ລັດ ແລະ ພາກທຸລະກິດ/ເອກະຊົນ ແລະ ປະຊາຊົນທ້ອງຖິ່ນ, ປະກອບມີ 8 ໂຄງການ.

**<u>ຍຸດທະສາດທີ 6</u>: ສົມທົບກັບບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງບັນດາແຫຼ່ງທ່ອງທ່ຽວຕາມການແບ່ງຂັ້ນຄຸ້ມຄອງ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ ປະກອບມີ 2 ແຜນງານ ແລະ 5 ໂຄງການດັ່ງນີ້:**

<u>**ແຜນງານທີ 1**</u>: ສົມທົບກັບບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງບັນດາແຫຼ່ງທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ, ປະກອບມີ 4 ໂຄງການ.

<u>**ແຜນງານທີ 2**</u>: ແຜນງານຈັດບູລິມະສິດ ພັດທະນາແຫຼ່ງທ່ອງທ່ຽວທົ່ວປະເທດ, ປະກອບມີ 1 ໂຄງການ.

**4.3.2. ເພື່ອບັນລຸຈຸດປະສົງ ເຮັດໃຫ້ ສປປ ລາວ ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວຂອງນັກທ່ອງທ່ຽວໃນທົ່ວໂລກ, ປະກອບມີ 4 ຍຸດທະສາດ ແລະ 7 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ພັດທະນາແຫຼ່ງທ່ອງທ່ຽວຢ່າງມີຈຸດສຸມ, ປັບປຸງພື້ນຖານໂຄງລ່າງ ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ເພື່ອຮອງຮັບນັກທ່ອງທ່ຽວ ເປັນຕົ້ນແມ່ນຢູ່ຕາມຈຸດເຊື່ອມຕໍ່ແຕ່ລະພາກ ແລະ ຕາມເສັ້ນທາງຍຸດທະສາດ. ພັດທະນາຜະລິດຕະພັນການທ່ອງທ່ຽວໃຫ້ມີຄຸນນະພາບ, ມີຄວາມຫຼາກຫຼາຍ ພ້ອມທັງປັບປຸງການບໍລິການ ໃຫ້ມີຄຸນນະພາບ ປະກອບມີ 1 ແຜນງານ ແລະ 10 ໂຄງການດັ່ງນີ້:**

<u>**ແຜນງານທີ 1**</u>: ແຜນງານພັດທະນາ ແລະ ປັບປຸງແຫຼ່ງທ່ອງທ່ຽວ, ຜະລິດຕະພັນການທ່ອງທ່ຽວ ພ້ອມການຕີລາຄາປະເມີນຜົນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງແຕ່ລະພາກ, ປະກອບມີ 10 ໂຄງການ.

**<u>ຍຸດທະສາດທີ 2</u>: ຄົ້ນຄວ້າ, ສຳຫຼວດ ແລະ ວາງແຜນພັດທະນາກິດຈະກຳການທ່ອງທ່ຽວ ຢູ່ຕາມແຫຼ່ງທ່ອງທ່ຽວທີ່ໄດ້ກຳນົດໄວ້ເພື່ອໃຫ້ແທດເໝາະກັບສະພາບການ ແລະ ສາມາດຕອບສະໜອງຕາມຄວາມຕ້ອງການ ຂອງນັກທ່ອງທ່ຽວ ປະກອບມີ 1 ແຜນງານ ແລະ 3 ໂຄງການດັ່ງນີ້:**

<u>**ແຜນງານທີ 1**</u>: ພັດທະນາກິດຈະກຳການທ່ອງທ່ຽວ ຢູ່ຕາມແຫຼ່ງທ່ອງທ່ຽວ ໃຫ້ມີຄວາມຫຼາກຫຼາຍ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 3</u>: ຊຸກຍູ້ ແລະ ໂຄສະນາການທ່ອງທ່ຽວຜ່ານສື່ຕ່າງໆ ໃຫ້ມີຄວາມຫຼາກຫຼາຍທັງຢູ່ພາຍໃນ ແລະ ຕ່າງປະເທດ, ປະກອບມີ 3 ແຜນງານ ແລະ 62 ໂຄງການດັ່ງນີ້:**

<u>**ແຜນງານທີ 1**</u>: ໂຄສະນາຜ່ານສື່ພາຍໃນ ແລະ ຕ່າງປະເທດ 10 ໂຄງການ.

<u>**ແຜນງານທີ 2**</u>: ຈັດພິມສິ່ງພິມໂຄສະນາ ແລະ ສະໜອງອຸປະກອນການໂຄສະນາການທ່ອງທ່ຽວ 44 ໂຄງການ.

<u>**ແຜນງານທີ 3**</u>: ເປັນເຈົ້າພາບຈັດງານສົ່ງເສີມການທ່ອງທ່ຽວ ລະດັບອະນຸພາກພື້ນ ແລະ ສາກົນ, ສົມທົບກັບພາກ ທຸລະກິດໃນການໂຄສະນາ ແລະ ຂາຍຜະລິດຕະພັນການທ່ອງທ່ຽວ ຢູ່ບັນດາຕະຫຼາດນັກທ່ອງທ່ຽວເປົ້າໝາຍມີ 8 ໂຄງການ.

**<u>ຍຸດທະສາດທີ 4</u>: ສົມທົບກັບບັນດາແຂວງ ແລະ ພາກທຸລະກິດໃນການອອກແບບ ແລະ ຜະລິດສິ່ງພິມໂຄ ສະນາການທ່ອງທ່ຽວລາວ ໃຫ້ຖືກຕາມຄວາມຮຽກຮ້ອງຕ້ອງການຢ່າງພຽງພໍ, ປະກອບມີ 2 ແຜນງານ ແລະ 6 ໂຄງ ການຄືດັ່ງນີ້:**

<u>**ແຜນງານທີ 1**</u>: ລະດົມການມີສ່ວນຮ່ວມ ຂອງພາກທຸລະກິດໃນການອອກແບບ ແລະ ຜະລິດສິ່ງພິມ ໂຄສະນາການທ່ອງທ່ຽວລາວ ໃຫ້ຖືກຕາມຄວາມຮຽກຮ້ອງຕ້ອງການຢ່າງພຽງພໍ, ປະກອບມີ 1 ໂຄງການ.

**<u>ແຜນງານທີ 2</u>**: ຝຶກອົບຮົມ ສ້າງຂີດຄວາມສາມາດ ຂອງພະນັກງານປະຈໍາຢູ່ບັນດາແຂວງ ໃນການອອກແບບ ແລະ ຜະລິດສິ່ງພິມໂຄສະນາການທ່ອງທ່ຽວລາວ ໃຫ້ຖືກຕາມຄວາມຮຽກຮ້ອງຕ້ອງການ, ມີ 5 ໂຄງການ.

**4.3.3. ເພື່ອບັນລຸຈຸດປະສົງ ໃນການເຊື່ອມໂຍງການທ່ອງທ່ຽວ ຂອງ ສປປ ລາວ ເຂົ້າກັບການທ່ອງທ່ຽວ ໃນລະດັບພາກພື້ນ ແລະ ສາກົນ, ປະກອບມີ 12 ຍຸດທະສາດ ແລະ 17 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ພັດທະນາລະບົບ ການເກັບກໍາຂໍ້ມູນສະຖິຕິຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ຕາມດ່ານສາກົນໃຫ້ເປັນລະບົບທີ່ທັນສະໄໝວ່ອງໄວ, ຮັບປະກັນການເກັບກໍາຂໍ້ມູນທີ່ມີຄວາມຊັດເຈນ ແລະ ລາຍງານຕົວເລກສະຖິຕິໃຫ້ທັນກັບສະພາບການ, ປະກອບມີ 1 ແຜນງານ ແລະ 7 ໂຄງການ ດັ່ງນີ້:**

**<u>ແຜນງານ 1</u>**: ພັດທະນາລະບົບການເກັບກໍາຂໍ້ມູນສະຖິຕິ ການທ່ອງທ່ຽວຢູ່ຂັ້ນສູນກາງ, ທ້ອງຖິ່ນ ແລະ ດ່ານສາກົນໃຫ້ເປັນລະບົບລວມສູນ,ທັນສະໄໝວ່ອງໄວ ຮັບປະກັນການເກັບກໍາຂໍ້ມູນມີຄວາມຊັດເຈນ,ປະກອບມີ 7 ໂຄງການ.

**<u>ຍຸດທະສາດທີ 2</u>: ສ້າງກິດຈະກໍາ ແລະ ລາຍການທ່ອງທ່ຽວທີ່ໂດດເດັ່ນຢູ່ຕາມຈຸດເຊື່ອມຕໍ່ ແຕ່ລະພາກ ແລະ ເຊື່ອມຕໍ່ປະເທດໃກ້ຄຽງ, ປະກອບມີ 1 ແຜນງານ ແລະ 16 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ສໍາຫຼວດບັນດາກິດຈະການທ່ອງທ່ຽວ ແລະ ສ້າງກິດຈະກໍາ, ລາຍການທ່ອງທ່ຽວ ທີ່ໂດດເດັ່ນຢູ່ຕາມຈຸດເຊື່ອມຕໍ່ແຕ່ລະພາກ ແລະ ເຊື່ອມຕໍ່ປະເທດໃກ້ຄຽງ, ປະກອບມີ 18 ໂຄງການ.

**<u>ຍຸດທະສາດທີ 3</u>: ສ້າງແຜນຍຸດທະສາດການຕະຫຼາດການທ່ອງທ່ຽວ ປະຈໍາປີ ຂອງ ສປປ ລາວ ສົມທົບກັບຜູ້ປະກອບການທຸລະກິດການທ່ອງທ່ຽວ ໃນການສ້າງເປັນວົງຈອນທີ່ເຊື່ອມໂຍງແຫຼ່ງທ່ອງທ່ຽວ ຂອງແຕ່ລະພາກ ແລະ ໃນອານຸພາກພື້ນ, ປະກອບມີ 2 ແຜນງານ ແລະ 5 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ຈັດກອງປະຊຸມຜັນຂະຫຍາຍກິດຈະກໍາໂຄສະນາການທ່ອງທ່ຽວປະຈໍາປີຂອງ ສ ປປ ລາວ ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ສ້າງແຜນຍຸດທະສາດການຕະຫຼາດການທ່ອງທ່ຽວ ປະຈໍາປີ ຂອງ ສປປ ລາວ, ມີ3 ໂຄງການ.

**<u>ຍຸດທະສາດທີ 4</u>: ດໍາເນີນການສຶກສາຕະຫຼາດທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກັບສະພາບ ແລະ ຈຸດພິເສດ ຂອງການທ່ອງທ່ຽວລາວ, ປະກອບມີ 2 ແຜນງານ ແລະ 13 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ການເກັບກໍາ ແລະ ວິເຄາະຂໍ້ມູນກ່ຽວກັບນັກທ່ອງທ່ຽວ ຈາກການສໍາພາດ, ເກັບກໍາຂໍ້ມູນຕົວເລກສະຖິຕິ ການທ່ອງທ່ຽວ ແລະ ວິໄຈດ້ານການທ່ອງທ່ຽວ, ປະກອບມີ 8 ໂຄງການ.

**<u>ແຜນງານທີ 2</u>**: ສຶກສາວິໄຈກຸ່ມຕະຫຼາດນັກທ່ອງທ່ຽວ ຈາກປະເທດທີ່ເປັນເປົ້າໝາຍຕະຫຼາດ ການທ່ອງທ່ຽວຂອງ ສປປ ລາວ, ປະກອບມີ 5 ໂຄງການ.

**<u>ຍຸດທະສາດທີ 5</u>: ພັດທະນາກິດຈະກໍາສົ່ງເສີມການທ່ອງທ່ຽວ ເພື່ອຊຸກຍູ້ໃຫ້ ຜູ້ປະກອບການທຸລະກິດທ່ອງທ່ຽວລາວ ສາມາດເຊື່ອມໂຍງກັບບັນດາປະເທດ ໃນອານຸພາກພື້ນ ແລະ ສາກົນ, ປະກອບມີ 2 ແຜນງານ ແລະ 10 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ເຊື່ອມໂຍງລາຍການທ່ອງທ່ຽວ, ກໍານົດ ແລະ ໂຄສະນາລາຍການທ່ອງທ່ຽວ ຂອງ ສປປ ລາວກັບລາຍການທ່ອງທ່ຽວ ຂອງ ສປ ຈີນ, ສສ ຫວຽດນາມ, ມຽນມ້າ, ກໍາປູເຈຍ, ປະເທດໄທ ແລະ ປະເທດອານຸພາກພື້ນແມ່ນໍ້າຂອງ ປະກອບມີ 7 ໂຄງການ.

**<u>ແຜນງານທີ 2</u>**: ກໍານົດ ແລະ ໂຄສະນາລາຍການທ່ອງທ່ຽວ ຕາມຈຸດເຊື່ອມຕໍ່ວົງຈອນການທ່ອງທ່ຽວ ໃນແຕ່ລະພາກ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 6</u>: ສຳຫຼວດເກັບກຳຂໍ້ມູນ ແລະ ພັດທະນາສິ່ງອຳນວຍຄວາມສະດວກຢູ່ຈຸດເຊື່ອມຕໍ່ແຕ່ລະພາກ ບົນພື້ນຖານການຕົກລົງ ຂອງກອງປະຊຸມເຊື່ອມຕໍ່ແຕ່ລະພາກ, ປະກອບມີ 1 ແຜນ ງານ ແລະ 14 ໂຄງການ ຄືດັ່ງນີ້:**

**<u>ແຜນງານທີ 1</u>**: ສຳຫຼວດ, ເກັບກຳຂໍ້ມູນສິ່ງອຳນວຍຄວາມສະດວກ ແລະ ພັດທະນາ, ປັບປຸງພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກ ແລະ ຜະລິດຕະພັນການທ່ອງທ່ຽວ ຢູ່ຈຸດເຊື່ອມຕໍ່ ແຕ່ລະພາກ, ມີ 14 ໂຄງການ

**<u>ຍຸດທະສາດທີ 7</u>: ສົມທົບກັບສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສູນ ລາວປະຈຳຢູ່ຕ່າງ ປະເທດ ເພື່ອເພີ່ມທະວີສາຍພົວພັນ ແລະ ການຮ່ວມມືໃນການຂະຫຍາຍຜູ້ຕາງໜ້າ, ຕົວແທນ ການທ່ອງທ່ຽວລາວ ຢູ່ບັນດາປະເທດທີ່ເປັນເປົ້າໝາຍ ສຳລັບການທ່ອງທ່ຽວລາວ, ປະກອບມີ 1 ແຜນງານ ແລະ 8 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ຂະຫຍາຍຜູ້ຕາງໜ້າ/ຕົວແທນການທ່ອງທ່ຽວລາວ ຢູ່ບັນດາປະເທດເອີຣົບ, ປະເທດອາຊີ-ປາຊີຟິກ ແລະ ບັນດາປະເທດອາຊຽນ ປະກອບມີ 8 ໂຄງການ.

**<u>ຍຸດທະສາດທີ 8</u>: ຈັດຕັ້ງປະຕິບັດປັບປຸງ ແລະ ພັດທະນາຜະລິດຕະພັນການທ່ອງທ່ຽວ ຂອງ ສປປ ລາວ ໃຫ້ມີຄຸນນະພາບ, ສາມາດເຊື່ອມໂຍງກັບຜະລິດຕະພັນທ່ອງທ່ຽວ ຂອງປະເທດສະມາຊິກອາຊຽນ ແລະ ພາກພື້ນ, ປະກອບມີ 1 ແຜນງານ ແລະ 3 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ແຜນງານພັດທະນາຜະລິດຕະພັນທ່ອງທ່ຽວ ຂອງ ສປປ ລາວ, ປະກອບມີ 3 ໂຄງການ:

**<u>ຍຸດທະສາດທີ 9</u>: ຈັດຕັ້ງປະຕິບັດຍຸດທະສາດພັດທະນາ ແລະ ປັບປຸງມາດຕະຖານການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະ ສາກົນ, ປະກອບມີ 1 ແຜນງານ ແລະ 9 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ສ້າງກິດຈະກຳ ແລະ ລາຍການທ່ອງທ່ຽວ ທີ່ໂດດເດັ່ນຢູ່ຕາມຈຸດເຊື່ອມຕໍ່ແຕ່ລະພາກ ແລະ ເຊື່ອມຕໍ່ປະເທດໃກ້ຄຽງ, ປະກອບມີ 9 ໂຄງການ.

**<u>ຍຸດທະສາດທີ 10</u>: ສົ່ງເສີມບັນດາຫົວໜ່ວຍທຸລະກິດ ໃນຂະແໜງການທ່ອງທ່ຽວ ໃຫ້ມີຄວາມເຂັ້ມແຂງ ສາມາດແຂ່ງຂັນ ແລະ ເຊື່ອມໂຍງເຂົ້າກັບປະຊາຄົມເສດຖະກິດອາຊຽນ ແລະ ສາກົນ, ປະກອບມີ 1 ແຜນງານ ແລະ 8 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ຈັດກອງປະຊຸມປຶກສາຫາລື ແລກປ່ຽນບົດຮຽນກັບຫົວໜ່ວຍທຸລະກິດ ແລະ ສະມາຄົມໂຮງແຮມ ແລະຮ້ານອາຫານ, ຫົວໜ່ວຍທຸລະກິດບໍລິການນຳທ່ຽວ ແລະ ສະມາຄົມທຸລະກິດທ່ອງທ່ຽວ ປະກອບມີ 8 ໂຄງການ.

**<u>ຍຸດທະສາດທີ 11</u>: ສົ່ງເສີມການຮ່ວມມືດ້ານການທ່ອງທ່ຽວ ກັບບັນດາປະເທດສະມາຊິກອາຊຽນ, ອານຸພາກພື້ນແມ່ນ້ຳຂອງ, ບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ, ອົງການທ່ອງທ່ຽວໂລກ, ຮ່ວມມື 2 ຝ່າຍ, ຮ່ວມມື 3 ຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນໃຫ້ແໜ້ນແຟ້ນ, ປະກອບມີ 3 ແຜນງານ ແລະ 16 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ແຜນງານການຮ່ວມມື ອາຊຽນ, ປະເທດອານຸພາກພື້ນແມ່ນ້ຳຂອງ, ອາຊີ-ປາຊີຟິກ, ປະກອບມີ 6 ໂຄງການ.

**<u>ແຜນງານທີ່ 2</u>**: ແຜນງານການຮ່ວມມືກັບອົງການທ່ອງທ່ຽວໂລກ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ, ປະກອບມີ 6 ໂຄງການ

**<u>ແຜນງານທີ 3</u>**: ແຜນງານການຮ່ວມມື ສອງຝ່າຍ, ສາມຝ່າຍ ແລະ ຫຼາຍຝ່າຍ, ປະກອບມີ 4 ໂຄງການ.

**<u>ຍຸດທະສາດທີ 12</u>: ຊຸກຍູ້ການສ້າງວົງຈອນການທ່ອງທ່ຽວ ຂອງແຕ່ລະພາກ ແລະ ກັບ ອະນຸພາກພື້ນໂດຍການສົມທົບກັບຜູ້ປະກອບການທຸລະກິດທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 7 ໂຄງ ການ ດັ່ງນີ້:**

**ແຜນງານທີ 1**: ພັດທະນາວົງຈອນການທ່ອງທ່ຽວ ແລະ ສ້າງລາຍການທ່ອງທ່ຽວ ທີ່ສາມາດເຊື່ອມໂຍງກັບບັນດາປະເທດ ໃນອະນຸພາກພື້ນ ແລະ ອາຊຽນ, ປະກອບມີ 7 ໂຄງການ.

**4.3.4. ເພື່ອບັນລຸຈຸດປະສົງໃນການພັດທະນາ ແລະ ສົ່ງເສີມ ການທ່ອງທ່ຽວ ໃຫ້ກາຍເປັນຂະແໜງການ ບູລິມາສິດອັນໜຶ່ງ, ຊ່ວຍໃຫ້ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກຕາມນະໂຍບາຍ ຂອງລັດຖະບານ, ປະກອບມີ 6 ຍຸດທະສາດ ແລະ 8 ແຜນງານດັ່ງນີ້.**

**ຍຸດທະສາດທີ 1**: **ສົ່ງເສີມບົດບາດ ຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ. ສ້າງຄວາມເຂັ້ມແຂງທາງດ້ານວິຊາການໃນວຽກງານການວາງແຜນ ແລະ ພັດທະນາການທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 9 ໂຄງການດັ່ງນີ້:**

**ແຜນງານທີ 1**: ການສ້າງຄວາມເຂົ້າໃຈຕໍ່ສັງຄົມ ກ່ຽວກັບບົດບາດ ຍິງ-ຊາຍ ໃນຂົງເຂດອຸດສະຫະກຳ ການທ່ອງທ່ຽວ ແລະ ການສົ່ງເສີມບົດບາດຍິງ-ຊາຍ ໂດຍການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ ໃນຂະແໜງການທ່ອງທ່ຽວ ແລະ ປະກອບ ມີ 9 ໂຄງການ.

**ຍຸດທະສາດທີ 2**: **ພັດທະນາການທ່ອງທ່ຽວ ແບບອະນຸລັກປະຊາຊົນມີສ່ວນຮ່ວມ (CBT) ຢ່າງມີຈຸດສຸມ, ປະກອບມີ 1 ແຜນງານ ແລະ 36 ໂຄງການດັ່ງນີ້:**

**ແຜນງານທີ 1**: ແຜນງານພັດທະນາຜະລິດຕະພັນ ການທ່ອງທ່ຽວອະນຸລັກປະຊາຊົນ ມີສ່ວນຮ່ວມໃນຂອບເຂດທົ່ວ ປະເທດເພື່ອສ້າງ ສປປ ລາວ ໃຫ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວອະນຸລັກລະດັບໂລກ, ປະກອບມີ 36 ໂຄງການ.

**ຍຸດທະສາດທີ 3**: **ພັດທະນາຜະລິດຕະພັນເຄືອຄ່າຍຜະລິດ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວຢ່າງມີຈຸດສຸມ (Supply Chain), ປະກອບມີ 2 ແຜນງານ ແລະ 69 ໂຄງການດັ່ງນີ້:**

**ແຜນງານທີ 1**: ແຜນງານພັດທະນາເຄືອຄ່າຍຜະລິດ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ ຂອງ ສປປ ລາວ, ປະກອບມີ 19 ໂຄງການ.

**ແຜນງານທີ 2**: ແຜນງານສຳຫຼວດ, ຄັດເລືອກ ແລະ ພັດທະນາເຄືອຄ່າຍຜະລິດ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ ໃນແຕ່ລະພາກ ສປປ ລາວ, ປະກອບມີ 50 ໂຄງການ.

**ຍຸດທະສາດທີ 4**: **ສົ່ງເສີມຄວາມຮູ້ດ້ານການທ່ອງທ່ຽວ ແລະ ການປົກປັກຮັກສາ ຊັບພະຍາກອນທ່ອງທ່ຽວໃຫ້ແກ່ເຍົາວະຊົນ ແລະ ຊາວໜຸ່ມ, ປະກອບມີ 1 ແຜນງານ ແລະ 2 ໂຄງການດັ່ງນີ້:**

**ແຜນງານທີ 1**: ການປູກຈິດສຳນຶກດ້ານການທ່ອງທ່ຽວ ແລະ ການປົກປັກຮັກສາຊັບພະຍາກອນທ່ອງທ່ຽວໃຫ້ແກ່ເຍົາວະຊົນ, ປະກອບມີ 2 ໂຄງການ.

**ຍຸດທະສາດທີ 5**: **ສົມທົບກັບບັນດາບໍລິສັດທ່ອງທ່ຽວ ແລະ ບັນດາແຂວງ ໃນການ ຈັດງານເທດສະການ, ບຸນປະເພນີທີ່ສຳຄັນ ປະຈຳທ້ອງຖິ່ນຕົນຢ່າງເປັນປົກກະຕິ ໂດຍແນ່ໃສ່ໂຄສະນາການທ່ອງທ່ຽວ ໃຫ້ສັງຄົມລາວໄດ້ຮັບຮູ້ ແລະ ເດີນທາງທ່ອງທ່ຽວຢູ່ ໃນ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ປະກອບມີ 1 ແຜນງານ ແລະ 21 ໂຄງການດັ່ງນີ້:**

**ແຜນງານທີ 1**: ສົ່ງເສີມງານເທດສະການ ແລະ ງານບຸນປະເພນີທ້ອງຖິ່ນ, ປະກອບມີ 21 ໂຄງການ.

**ຍຸດທະສາດທີ 6**: **ຈັດກິດຈະກຳສົ່ງເສີມການທ່ອງທ່ຽວ ທີ່ຕິດພັນກັບການໂຄສະນາການທ່ອງທ່ຽວ "ລາວທ່ຽວລາວ" ໂດຍເນັ້ນໃສ່ການທ່ອງທ່ຽວ ທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເພື່ອດຶງດູດກຸ່ມຕະຫຼາດທ່ອງທ່ຽວພາຍໃນ, ປະກອບມີ 1 ແຜນງານ ແລະ 9 ໂຄງການດັ່ງນີ້:**

**แຜນງານທີ 1**: ຈັດຄາຣາວານສົ່ງເສີມການທ່ອງທ່ຽວ ແລະ ໂຄສະນາການທ່ອງທ່ຽວພາຍໃນ **"ລາວທ່ຽວລາວ"**, ປະກອບມີ 9 ໂຄງການ.

**4.3.5. ເພື່ອບັນລຸຈຸດປະສົງ ໃນການພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ ໃຫ້ມີຄຸນນະພາບ, ສາມາດຕອບສະໜອງ ການບໍລິການທີ່ປະທັບໃຈໃຫ້ແກ່ນັກທ່ອງທ່ຽວ ແລະ ສາມາດເຊື່ອມໂຍງກັບສາກົນ ເທື່ອລະກ້າວ, ປະກອບມີ 3 ຍຸດທະສາດ ແລະ 4 ແຜນງານດັ່ງນີ້..**

**ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງ ດ້ານວິຊາການໃນວຽກງານການວາງແຜນ ແລະ ພັດທະນາການທ່ອງທ່ຽວປະກອບມີ 1 ແຜນງານ ແລະ 5 ໂຄງການດັ່ງນີ້:**

**ແຜນງານທີ 1**: ຝຶກອົບຮົມວິຊາການດ້ານການວາງແຜນ ແລະ ພັດທະນາການທ່ອງທ່ຽວ, ມີ 5 ໂຄງການ.

**ຍຸດທະສາດທີ 2: ຍົກລະດັບຂີດຄວາສາມາດ ແລະ ການປະສານງານ ຂອງພາກສ່ວນກ່ຽວຂ້ອງ ຂອງພາກລັດ ແລະ ເອກະຊົນໃນການອະນຸລັກຊັບພະຍາກອນ ດ້ານການທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 6 ໂຄງການຄືດັ່ງນີ້:**

**ແຜນງານທີ 1**: ຍົກລະດັບຄວາມຮູ້ ຄວາມສາມາດ ດ້ານວິຊາການໃນການຄຸ້ມຄອງການທ່ອງທ່ຽວ ແລະ ການປະສານສົມທົບພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນໃນການປົກປັກຮັກສາຊັບພະຍາກອນ ດ້ານການທ່ອງທ່ຽວ ຂັ້ນສູນກາງ ແລະ ທ້ອງຖິ່ນ ປະກອບມີ 6 ໂຄງການ.

**ຍຸດທະສາດທີ 3: ຍົກລະດັບຂີດຄວາມສາມາດ ຂອງບຸກຄະລາກອນ ແລະ ປັບປຸງຂອດປະສານງານໃນການເກັບກຳ ຂໍ້ມູນສະຖິຕິການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ແຜນງານ ແລະ 10 ໂຄງການດັ່ງນີ້:**

**ແຜນງານທີ 1**: ພັດທະນາຂີດຄວາມສາມາດ ຂອງບຸກຄະລາກອນໃນການເກັບກຳຂໍ້ມູນສິຖິຕິການທ່ອງ ທ່ຽວ ,ປະກອບມີ 6 ໂຄງການ.

**ແຜນງານທີ 2**: ການສ້າງລະບົບການລາຍງານ ວຽກງານສະຖິຕິການທ່ອງທ່ຽວ ແລະ ສ້າງຄວາມເຂັ້ມແຂງ ໃຫ້ລະບົບ ການເກັບກຳຂໍ້ມູນສະຖິຕິການທ່ອງທ່ຽວ ປະກອບມີ 4 ໂຄງການ.

**4.3.6. ເພື່ອບັນລຸຈຸດປະສົງ ໃນການພັດທະນາຜະລິດຕະພັນການທ່ອງທ່ຽວໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນທົ່ວປະເທດ ແລະ ພັດທະນາສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກ, ປະກອບມີ 2 ຍຸດທະສາດ.**

**ຍຸດທະສາດທີ 1: ກຳນົດ ແລະ ສົ່ງເສີມຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ຂອງແຕ່ລະແຂວງ ຢ່າງມີຈຸດສຸມ, ມີຄຸນນະພາບ ແລະ ຄົບວົງຈອນ ສາມາດຕອບສະໜອງຄວາມຕ້ອງ ການຂອງຕະຫຼາດການທ່ອງທ່ຽວ, ປະກອບມີ 2 ແຜນງານ ແລະ 54 ໂຄງການຄືດັ່ງນີ້:**

**ແຜນງານທີ 1**: ພັດທະນາຜະລິດຕະພັນການທ່ອງທ່ຽວ **ໜຶ່ງ**ເມືອງ**ໜຶ່ງ**ຜະລິດຕະພັນ, ມີ 4 ໂຄງການ.

**ແຜນງານທີ 2**: ແຜນງານສຳຫຼວດ ແລະ ຄັດເລືອກຜະລິດຕະພັນການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ແຕ່ລະພາກ ຂອງ ສປປ ລາວ, ປະກອບມີ 50 ໂຄງການ.

**ຍຸດທະສາດທີ 2: ພັດທະນາຜະລິດຕະພັນການທ່ອງທ່ຽວ ໃຫ້ມີຄວາມຫຼາກຫຼາຍ, ສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນການທ່ອງທ່ຽວບົນພື້ນຖານທ່າແຮງ ແລະ ເອກະລັກ ຂອງທ້ອງຖິ່ນ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດການທ່ອງທ່ຽວ, ປະກອບມີ 2 ແຜນງານ ແລະ 12 ໂຄງການດັ່ງນີ້:**

**ແຜນງານທີ 1**: ພັດທະນາ ແລະ ປັບປຸງຜະລິດຕະພັນການທ່ອງທ່ຽວ ໃຫ້ມີຄຸນນະພາບ, ມີຄວາມຫຼາກຫຼາຍ, ປະກອບ ມີ 3 ໂຄງການ.

**ແຜນງານທີ 2**: ແຜນງານພັດທະນາຜະລິດຕະພັນການທ່ອງທ່ຽວ ຂອງ ສປປ ລາວ, ປະກອບມີ 9 ໂຄງການ.

**4.3.7. ເພື່ອບັນລຸຈຸດປະສົງ ໃນການສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ, ສຳຫຼວດ,ຈັດສັນແຫຼ່ງທ່ອງທ່ຽວ, ປັບປຸງ ແລະ ພັດທະນາສະຖານທີ່ທ່ອງທ່ຽວ ທີ່ມີການບໍລິການຄົບວົງຈອນ ແລະ ມີຄຸນນະພາບ, ປະກອບມີ 4 ຍຸດທະສາດ ແລະ 6 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ດຳເນີນການສຳຫຼວດເກັບກຳຂໍ້ມູນ ແລະ ພັດທະນາສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກບົນພື້ນຖານການຕົກລົງ ຂອງກອງປະຊຸມເຊື່ອມຕໍ່ແຕ່ລະພາກ, ປະກອບມີ 2 ແຜນງານ ແລະ 10 ໂຄງການຄືດັ່ງນີ້:**

**<u>ແຜນງານທີ່ 1</u>**: ຕີລາຄາ ແລະ ປະເມີນຜົນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ຂອງແຕ່ລະພາກ, ປະກອບມີ 7 ໂຄງການ.

**<u>ແຜນງານທີ 2</u>**: ສຳຫຼວດ ແລະ ເກັບກຳຂໍ້ມູນກ່ຽວກັບສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 2</u>: ການສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ ທີ່ເປັນບູລິມະສິດ ຂອງແຕ່ລະແຂວງ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ແຜນງານດັ່ງນີ້ ແລະ 60 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ແຜນງານຂຶ້ນບັນຊີ ແລະ ຈັດບູລິມະສິດ ໃນການພັດທະນາແຫຼ່ງທ່ອງທ່ຽວທົ່ວປະເທດ, ປະກອບມີ 3ໂຄງການ.

**<u>ແຜນງານທີ 2</u>**: ແຜນງານການສຳຫຼວດ-ຈັດສັນແຫຼ່ງທ່ອງທ່ຽວ ແລະ ການສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ ປະກອບມີ 57 ໂຄງການ.

**<u>ຍຸດທະສາດທີ 3</u>: ສຶກສາຄົ້ນຄວ້າຄວາມເປັນໄປໄດ້ ແລະ ທ່າແຮງໃນການພັດທະນາແຫຼ່ງທ່ອງທ່ຽວ ເພື່ອການກຳນົດເງື່ອນໄຂມາດຕະຖານໃນການຈັດລະດັບແຫຼ່ງທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 2 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ຄົ້ນຄວ້າ ແລະ ກຳນົດເງື່ອນໄຂມາດຕະຖານ ໃນການຈັດລະດັບແຫຼ່ງທ່ອງທ່ຽວ ໃນການພັດທະນາປະກອບມີ 2 ໂຄງການຄື.

**<u>ຍຸດທະສາດທີ 4</u>: ສົມທົບກັບບັນດາແຂວງຈັດບູລິມະສິດພັດທະນາແຫຼ່ງທ່ອງທ່ຽວ ເພື່ອລົງ ສຳຫຼວດເກັບກຳຂໍ້ມູນ ແລະ ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວ, ປະກອບມີ 1 ແຜນງານ ແລະ 40 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ການສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ, ປະກອບມີ 40 ໂຄງການ.

**4.3.8. ເພື່ອບັນລຸຈຸດປະສົງ ໃນການກໍ່ສ້າງສິ່ງອຳນວຍຄວາມສະດວກໃນແຫຼ່ງທ່ອງທ່ຽວ ປັກຫຼັກໝາຍ ຂອບເຂດແຫຼ່ງທ່ອງທ່ຽວໃນທົ່ວປະເທດ ແລະ ສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ພ້ອມທັງປະກອບ ອຸປະກອນສື່ສານໃຫ້ເປັນລະບົບຢູ່ແຕ່ລະດ່ານສາກົນ, ປະກອບມີ 2 ຍຸດທະສາດ ແລະ 4 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ກໍ່ສ້າງ ແລະ ປັບປຸງສິ່ງອຳນວຍຄວາມສະດວກໃນແຫຼ່ງທ່ອງທ່ຽວ ໃຫ້ມີມາດຕະຖານ,ກົມກືນກັບສະພາບແວດລ້ອມ ແລະ ຮັກສາເອກະລັກ ຂອງທ້ອງຖິ່ນ, ປະກອບມີ 3 ແຜນງານ ແລະ 98 ໂຄງການດັ່ງນີ້:**

**<u>ແຜນງານທີ 1</u>**: ພັດທະນາເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວ, ປະກອບມີ 2 ໂຄງການ.

**<u>ແຜນງານທີ 2</u>**: ສ້າງ ແລະ ປັບປຸງຫ້ອງຂໍ້ມູນຂ່າວສານ ໃນພື້ນທີ່ ທີ່ມີທ່າແຮງດ້ານການທ່ອງທ່ຽວປະກອບມີ 21 ໂຄງການ.

**<u>ແຜນງານທີ 3</u>**: ປັບປຸງແຫຼ່ງທ່ອງທ່ຽວທີ່ບໍລິການແລ້ວ ແລະ ພັດທະນາແຫຼ່ງທ່ອງທ່ຽວໃໝ່, ປະກອບມີ 75 ໂຄງການ ດັ່ງນີ້.

**ຍຸດທະສາດທີ 2: ສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອກຳນົດຂອບເຂດ ແລະ ປົກປັກຮັກສາແຫຼ່ງທ່ອງທ່ຽວທີ່ຊັດເຈນ, ປະກອບມີ 1 ແຜນງານ ແລະ 29 ໂຄງການດັ່ງນີ້:**

**ແຜນງານທີ 1**: ແຜນງານປົກປັກຮັກສາຂອບເຂດແຫຼ່ງທ່ອງທ່ຽວ ປະກອບມີ 29 ໂຄງການ.

**4.3.9. ເພື່ອບັນລຸຈຸດປະສົງໃນການສ້າງ, ປັບປຸງບັນດານິຕິກຳ, ມາດຕະຖານການທ່ອງທ່ຽວ ແລະ ເຜີຍແຜ່ບັນດານິຕິກຳຂອງຂະແໜງການທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ, ປະກອບມີ 3 ຍຸດທະສາດ.**

**ຍຸດທະສາດທີ 1: ສ້າງລະບຽບການ, ມາດຕະຖານການທ່ອງທ່ຽວໃຫ້ສອດຄ່ອງກັບ ສະພາບຄວາມເປັນຈິງພາຍໃນປະເທດ ແລະ ລະດັບອາຊຽນ. ປະກອບມີ 3 ແຜນງານ ແລະ 29 ໂຄງການຄື:**

**ແຜນງານທີ 1**: ປັບປຸງລະບຽບການໃຫ້ເໝາະສົມ ແລະ ມາດຕະຖານການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ, ປະກອບມີ 4 ໂຄງການ.

**ແຜນງານທີ 2**: ສ້າງມາດຕະຖານການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະ ເຜີຍແຜ່ມາດຕະຖານການທ່ອງທ່ຽວ ຕາມມາດຕະຖານອາຊຽນ ປະກອບມີ 16 ໂຄງການ.

**ແຜນງານທີ 3**: ກຳນົດມາດຕະຖານ ການຄຸ້ມຄອງວຽກງານການທ່ອງທ່ຽວ ຂອງ ສປປ ລາວ ແລະ ເຜີຍແຜ່ມາດຕະຖານ ການທ່ອງທ່ຽວ ຂອງ ສປປ ລາວ, ປະກອບມີ 9 ໂຄງການ.

**ຍຸດທະສາດທີ 2: ດຳເນີນການສຶກສາ, ຄົ້ນຄວ້າ ແລະ ຮ່າງນິຕິກຳ ໃນການສ້າງຕັ້ງບັນດາຫົວໜ່ວຍທຸລະກິດບໍລິການນຳທ່ຽວ, ສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກແຮມ, ພັດຕະຄານ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ ແລະ ສະຖານບັນເທີງ ຂອງ ສປປ ລາວ, ປະກອບມີ 3ແຜນງານ ແລະ 21 ໂຄງການຄື:**

**ແຜນງານທີ 1**: ກວດກາການສ້າງຕັ້ງບໍລິສັດບໍລິການນຳທ່ຽວ, ທຸລະກິດບໍລິການສະຖານທີ່ພັກແຮມ, ການສ້າງ ຕັ້ງຮ້ານອາຫານ ປະກອບມີ 9 ໂຄງການ.

**ແຜນງານທີ 2**: ກວດກາການຄຸ້ມຄອງ ສ້າງຕັ້ງທຸລະກິດບໍລິການສະຖານທີ່ທ່ອງທ່ຽວ ແລະ ທຸລະກິດບໍລິ ການສະຖານບັນເທີງ, ປະກອບມີ 6 ໂຄງການ.

**ແຜນງານທີ 3**: ເກັບກຳຂໍ້ມູນແລະສະຖິຕິຂອງຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວ, ປະກອບມີ 6 ໂຄງການ.

**ຍຸດທະສາດທີ 3: ສ້າງ ແລະ ປັບປຸງບັນດານິຕິກຳ ໃນຂະແໜງທ່ອງທ່ຽວໃຫ້ແທດເໝາະກັບສະພາບຄວາມເປັນຈິງ ຂອງການຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ຂອງ ສປປ ລາວ, ອະນຸພາກພື້ນ ແລະ ສາກົນ. ປະກອບມີ 3 ແຜນງານ ແລະ 22 ໂຄງການດັ່ງນີ້:**

**ແຜນງານທີ 1**: ປັບປຸງ ແລະ ສ້າງລະບຽບການ, ນິຕິກຳ ໃນການຄຸ້ມຄອງທຸລະກິດນຳທ່ຽວ, ສະຖານທີ່ພັກແຮມ, ຮ້ານອາຫານ, ສະຖານບັນເທີງ ແລະ ສະຖານທີ່ທ່ອງທ່ຽວ ປະກອບມີ 16 ໂຄງການ.

**ແຜນງານທີ 2**: ໂຄສະນາເຜີຍແຜ່ບັນດານິຕິກຳ ໃນຂະແໜງການທ່ອງທ່ຽວ, ປະກອບມີ 3 ໂຄງການ.

**ແຜນງານທີ 3**: ຈັດພິມປຶ້ມກົດໝາຍວ່າດ້ວຍການທ່ອງທ່ຽວ ແລະ ນິຕິກຳລຸ່ມກົດໝາຍ, ມີ 3 ໂຄງການ.

**4.3.10. ເພື່ອບັນລຸຈຸດປະສົງສົ່ງເສີມການລົງທຶນ ໃນຂະແໜງການທ່ອງທ່ຽວ ແລະ ຄຸ້ມຄອງການລົງທຶນ ໃຫ້ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ຍຸດທະສາດ ແລະ 4 ແຜນງານດັ່ງນີ້.**

**ຍຸດທະສາດທີ 1: ເປີດກວ້າງ ແລະ ສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນຮູບແບບການລົງທຶນຂອງພາກລັດ ແລະ ພາກເອກະຊົນ ໃນຂະແໜງການທ່ອງທ່ຽວບົນພື້ນຖານ ແຜນພັດທະນາ ຂອງ ສປປ ລາວ, ປະກອບມີ 2 ແຜນງານ ແລະ 6 ໂຄງການ ຄືດັ່ງນີ້:**

**ແຜນງານທີ 1**: ກຳນົດນະໂຍບາຍ ຂອງລັດຖະບານກ່ຽວກັບການໃຫ້ບູລິມະສິດຕໍ່ພາກທຸລະກິດໃນການລົງທຶນໃນຂະແໜງການທ່ອງທ່ຽວ, ປະກອບມີ 1 ໂຄງການ.

**ແຜນງານທີ 2**: ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃນການລົງທຶນ ຜ່ານປະຕູດຽວປະກອບມີ 5 ໂຄງການ.

**ຍຸດທະສາດທີ 2: ພັດທະນາລະບົບຖານຂໍ້ມູນການລົງທຶນພາຍໃນ ແລະ ຕ່າງປະເທດໃນ ຂະແໜງການທ່ອງທ່ຽວໃຫ້ຖືກຕ້ອງ ແລະ ຄົບຖ້ວນ, ປະກອບມີ 2 ແຜນງານ ແລະ 5 ໂຄງການຄື:**

**ແຜນງານທີ 1**: ການເກັບກຳຂໍ້ມູນສະຖິຕິການລົງທຶນພາຍໃນ ແລະ ຕ່າງປະເທດ, ປະກອບມີ 3 ໂຄງການ.

**ແຜນງານທີ 2**: ສ້າງຄວາມເຂັ້ມແຂງ ໃຫ້ແກ່ລະບົບຖານຂໍ້ມູນການລົງທຶນພາຍໃນ ແລະ ຕ່າງປະເທດ, ປະກອບມີ 2 ໂຄງການ.

**4.3.11. ເພື່ອບັນລຸຈຸດປະສົງ ໃນການຈັດລະດັບມາດຕະຖານ ແລະ ປະເພດໃຫ້ບັນດາ ຫົວໜ່ວຍທຸລະກິດການບໍລິການໃນຂະແໜງການທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ, ປະກອບມີ 1 ຍຸດທະສາດ ແລະ 3 ແຜນງານດັ່ງນີ້.**

**ຍຸດທະສາດທີ 1: ຄຸ້ມຄອງ, ຕິດຕາມ, ກວດກາ, ປັບປຸງ ແລະ ຈັດລະດັບມາດຕະຖານ ຜະລິດຕະພັນການທ່ອງທ່ຽວ ແລະ ການບໍລິການ, ກິດຈະການທຸລະກິດ ໃນຂະແໜງການທ່ອງທ່ຽວ ເຊັ່ນ: ທຸລະກິດນຳທ່ຽວ, ທຸລະກິດພັກແຮມ, ທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ, ສະຖານບັນເທີງ, ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ. ປະກອບມີ 3 ແຜນງານ ແລະ 28 ໂຄງການຄື:**

**ແຜນງານທີ 1**: ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປັບປຸງຄຸນນະພາບການບໍລິການ ຂອງບັນດາບໍລິສັດ ນຳທ່ຽວ, ທຸລະກິດການພັກແຮມ, ພັດຕະຄານ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ, ສະຖານບັນເທີງ ແລະ ສະຖານທີ່ທ່ອງທ່ຽວ ປະກອບມີ 12 ໂຄງການ.

**ແຜນງານທີ 2**: ຈັດຕັ້ງສະມາຄົມພະນັກງານນຳທ່ຽວ, ປະກອບມີ 7 ໂຄງການ.

**ແຜນງານທີ 3**: ຈັດລະດັບມາດຕະຖານ ໃຫ້ແກ່ທຸລະກິດສະຖານທີ່ພັກແຮມ, ທຸລະກິດຮ້ານອາຫານ ແລະ ສະຖານທີ່ທ່ອງທ່ຽວ ປະກອບມີ 9 ໂຄງການ.

**4.3.12. ເພື່ອບັນລຸຈຸດປະສົງ ໃນການຄຸ້ມຄອງບັນດາກິດຈະການ ທຸລະກິດການທ່ອງທ່ຽວ ແລະ ການບໍລິການໃນຂະແໜງການທ່ອງທ່ຽວ ແທດເໝາະກັບການຂະຫຍາຍຕົວ ຂອງການທ່ອງທ່ຽວ, ສະກັດກັ້ນປະກົດການຫຍໍ້ທໍ້ ແລະ ຜົນກະທົບທາງລົບທີ່ອາດເກີດຂຶ້ນ ໃນຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ຍຸດທະສາດ ແລະ 5 ແຜນງານດັ່ງນີ້.**

**ຍຸດທະສາດທີ 1: ຄຸ້ມຄອງ ແລະ ກວດກາບັນດາຫົວໜ່ວຍທຸລະກິດນຳທ່ຽວ ໃຫ້ມີການເຄື່ອນໄຫວຢ່າງມີປະສິດທິພາບ ເພື່ອຈັດປະເພດບໍລິການນຳທ່ຽວ. ປະກອບມີ 4 ແຜນງານ ແລະ 16 ໂຄງການຄື:**

**ແຜນງານທີ 1**: ກວດກາປັບປຸງຄຸນນະພາບການບໍລິການ ຂອງບັນດາບໍລິສັດນຳທ່ຽວ, ມີ 3 ໂຄງ ການ.

**ແຜນງານທີ 2**: ຈັດຕັ້ງກຸ່ມພະນັກງານນຳທ່ຽວ ທີ່ບໍ່ສັງກັດບໍລິສັດ, ປະກອບມີ 6 ໂຄງການ.

**ແຜນງານທີ 3**: ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງທຸລະກິດນຳທ່ຽວ,ມີ 2 ໂຄງການ.

**ແຜນງານທີ 4**: ຖອດຖອນແລກປ່ຽນບົດຮຽນ ກັບບັນດາປະເທດສະມາຊິກອາຊຽນ ກ່ຽວກັບການຄຸ້ມຄອງການທ່ອງທ່ຽວ, ປະກອບມີ 5 ໂຄງການ.

**ຍຸດທະສາດທີ 2: ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຄຸ້ມຄອງກິດຈະການທຸລະກິດໃນຂະແໜງການທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 8 ໂຄງການຄື:**

<u>ແຜນງານທີ 1</u>: ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງກິດຈະການທຸລະກິດ ໃນຂະແໜງການທ່ອງທ່ຽວຂັ້ນສູນກາງ ແລະ ທ້ອງຖິ່ນ, ປະກອບມີ 8 ໂຄງການ.

**4.3.13. ເພື່ອບັນລຸຈຸດປະສົງ ພັດທະນາຊັບພະຍາກອນມະນຸດ ໃນຂະແໜງການທ່ອງທ່ຽວໃຫ້ມີຄວາມສາມາດ , ປັບປຸງຫຼັກສູດການຮຽນ-ການສອນ ໃຫ້ເຊື່ອມໂຍງກັບສາກົນເທື່ອລະກ້າວ, ສ້າງເຄືອຄ່າຍປະສານງານ ລະຫວ່າງ ພາກລັດ,ເອກະຊົນ, ສ້າງຄວາມເຂັ້ມແຂງໃຫ້ສະຖາບັນການສຶກສາ ໃນຂະແໜງການທ່ອງທ່ຽວ, ປະກອບມີ 9 ຍຸດທະສາດ ແລະ 11 ແຜນງານດັ່ງນີ້.**

**<u>ຍຸດທະສາດທີ 1</u>: ຍົກລະດັບຂີດຄວາມສາມາດ ຂອງບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ ໄລຍະ ສັ້ນ ແລະ ໃນໄລຍະຍາວໃຫ້ມີປະສິດທິພາບ, ປະກອບມີ 2 ແຜນງານ ແລະ 15 ໂຄງການຄື:**

<u>ແຜນງານທີ 1</u>: ພັດທະນາບຸກຄະລາກອນໄລຍະສັ້ນ ແລະ ໄລຍະຍາວ, ປະກອບມີ 12 ໂຄງການ.

<u>ແຜນງານທີ 2</u>: ສ້າງ ແລະ ຍົກລະດັບຄູຝຶກ ຂອງຂະແໜງການທ່ອງທ່ຽວ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດ ທີ 2</u>: ພັດທະນາ ແລະ ປັບປຸງຫຼັກສູດ ການຮຽນ-ການສອນສໍາລັບວິທະຍາໄລ ແລະ ມະຫາວິທະຍາໄລໃຫ້ມີປະສິດທິພາບ ແລະ ເຊື່ອມໂຍງກັບສາກົນເທື່ອລະກ້າວ, ປະກອບມີ 1 ແຜນງານ ແລະ 9 ໂຄງການຄືດັ່ງນີ້:**

<u>ແຜນງານທີ 1</u>: ພັດທະນາຕໍາລາ ການຮຽນ-ການສອນ ສໍາລັບວິທະຍາໄລ ແລະ ມະຫາວິທະຍາໄລ ປະກອບມີ 9 ໂຄງການ.

**<u>ຍຸດທະສາດທີ 3</u>: ພັດທະນາ ແລະ ປັບປຸງຫຼັກສູດການຝຶກອົບຮົມ ໃນຂະແໜງການທ່ອງທ່ຽວ ໄລຍະສັ້ນ ແລະ ໄລຍະຍາວ ໃຫ້ມີປະສິດທິພາບ, ປະກອບມີ 1 ແຜນງານ ແລະ 6 ໂຄງການຄື:**

<u>ແຜນງານທີ 1</u>: ປັບປຸງຫຼັກສູດການຝຶກອົບຮົມການທ່ອງທ່ຽວ ໄລຍະສັ້ນ ແລະ ໄລຍະຍາວໃຫ້ມີປະສິດທິພາບ, ປະກອບມີ 6 ໂຄງການ.

**<u>ຍຸດທະສາດ 4</u>: ຊຸກຍູ້ການຈັດຕັ້ງປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະ ກັນ ກ່ຽວກັບວິຊາຊີບການທ່ອງທ່ຽວອາຊຽນໃຫ້ປະກົດຜົນເປັນຈິງ, ປະກອບມີ 1 ແຜນງານ ແລະ 3 ໂຄງການຄື:**

<u>ແຜນງານທີ 1</u>: ດໍາເນີນການປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະ ກັນກ່ຽວກັບມາດຕະຖານວິຊາຊີບທ່ອງທ່ຽວອາຊຽນ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 5</u>: ພັດທະນາຂີດຄວາມສາມາດ ຂອງພະນັກງານໃນຂະແໜງການທ່ອງທ່ຽວ ໃຫ້ມີຄວາມພ້ອມໃນການຈັດງານປີທ່ອງທ່ຽວລາວ ຄັ້ງທີ 3 ປີ 2017, ປະກອບມີ 1 ແຜນງານ ແລະ 9 ໂຄງການຄືດັ່ງນີ້:**

<u>ແຜນງານທີ 1</u>: ຍົກສູງຄວາມຮູ້ຄວາມສາມາດ ຂອງພະນັກງານໃນຂະແໜງການທ່ອງທ່ຽວ ໃຫ້ມີຄວາມພ້ອມໃນ ການຈັດງານປີທ່ອງທ່ຽວລາວ ຄັ້ງທີ 3 ໃນປີ 2017, ປະກອບມີ 9 ໂຄງການ.

**<u>ຍຸດທະສາດທີ 6</u>: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການສຶກສາໃນຂະແໜງການທ່ອງທ່ຽວພ້ອມທັງປັບ ປຸງລະບົບການຄຸ້ມຄອງບໍລິຫານ ແລະ ການຮຽນ-ການສອນ ໃຫ້ມີຄຸນະພາບ, ປະກອບມີ 1 ແຜນງານ ແລະ 3 ໂຄງການຄື:**

<u>ແຜນງານທີ 1</u>: ສ້າງຄວາມເຂັ້ມແຂງ ໃຫ້ແກ່ສະຖາບັນການທ່ອງທ່ຽວ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 7</u>: ພັດທະນາລະບົບ ການພັດທະນາຊັບພະຍາກອນມະນຸດ ໃນຂະແໜງທ່ອງທ່ຽວໃຫ້ມີປະ ສິດທິພາບສູງສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ, ປະກອບມີ 1 ແຜນງານ ແລະ 3 ໂຄງການຄື:**

__ແຜນງານທີ 1__: ຄົ້ນຄວ້າວິໄຈເພື່ອກຳນົດທິດທາງ ໃນການປັບປຸງການພັດທະນາຊັບພະຍາກອນມະນຸດ ແລະ ຝຶກອົບຮົມ ບົນພື້ນຖານຄວາມຕ້ອງການຕົວຈິງ, ປະກອບມີ 3 ໂຄງການ.

**__ຍຸດທະສາດທີ 8__: ສ້າງເຄືອຄ່າຍປະສານງານ ລະຫວ່າງ ພາກລັດ ແລະ ເອກະຊົນ, ພາຍໃນ ແລະ ຕ່າງປະເທດໃຫ້ກວ້າງຂວາງເຮັດໃຫ້ການພັດທະນາບຸກຄະລາກອນ ສອດຄ່ອງກັບຄວາມຕ້ອງການຕົວຈິງ ຂອງວຽກງານທ່ອງທ່ຽວໃນແຕ່ລະໄລຍະ, ປະກອບມີ 2 ແຜນງານ ແລະ 6 ໂຄງການຄື:**

__ແຜນງານທີ 1__: ພັດທະນາເຄືອຄ່າຍປະສານງານສະຖາບັນການສຶກສາ ລະຫວ່າງ ພາກລັດ ແລະ ເອກະຊົນ, ປະກອບມີ 3 ໂຄງການ.

__ແຜນງານທີ 2__: ສ້າງຄວາມເຂັ້ມແຂງໃນການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນ, ມີ 3 ໂຄງ ການ.

**__ຍຸດທະສາດທີ 9__: ເສີມຂະຫຍາຍການຮ່ວມມືກັບອົງການຈັດຕັ້ງສາກົນ ໃນການພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 3 ໂຄງການຄື:**

__ແຜນງານທີ 1__: ປະສານງານກັບອົງການຈັດຕັ້ງສາກົນ ໃນການພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ, ປະກອບມີ 3 ໂຄງການ.

### 4.4. __ວຽກເສນາທິການ__

**ເພື່ອບັນລຸເປົ້າໝາຍໃນການສ້າງຄວາມເຂັ້ມແຂງໃຫ້ແກ່ກົມກອງທີ່ເປັນເສນາທິການ ໃນການບໍລິຫານຄຸ້ມຄອງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ຄົ້ນຄວ້າສັງລວມ ບັນດາແຜນງານ ແລະ ໂຄງການໃຫ້ສອດຄ່ອງກັບ 6 ຈຸດປະສົງ ທີ່ກຳນົດໄວ້ຊຶ່ງມີລາຍລະອຽດດັ່ງນີ້ :**

**4.4.1. ເພື່ອບັນລຸຈຸດປະສົງ ໃນການປັບປຸງ ແລະ ພັດທະນາ ການຄຸ້ມຄອງວຽກບໍລິຫານ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃຫ້ເປັນລະບົບ, ປະກອບມີ 5 ຍຸດທະສາດ.**

**__ຍຸດທະສາດທີ 1__: ຍົກສູງສະຕິທາງດ້ານການເມືອງແນວຄິດ ແລະ ທິດສະດີ, ກໍ່ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້, ຄວາມສາມາດ ຂອງພະນັກງານບໍລິຫານ ແລະ ຄຸ້ມຄອງຫ້ອງການໃຫ້ ສົມຄູ່ກັບຄວາມຕ້ອງການຂອງວຽກງານ , ປະກອບມີ: 2 ແຜນງານ ແລະ 19 ໂຄງການ ດັ່ງນີ້:**

__ແຜນງານທີ 1__: ຍົກລະດັບທິດສະດີ ແລະ ວຽກງານແນວຄິດການເມືອງ ຂອງພະນັກງານລັດຖະກອນ, ປະກອບມີ 4 ໂຄງການ.

__ແຜນງານທີ 2__: ພັດທະນາບຸກຄະລາກອນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ການຄຸ້ມຄອງ-ບໍລິຫານ, ປະກອບມີ 15 ໂຄງການ:

` **__ຍຸດທະສາດທີ 2__: ປັບປຸງກົນໄກການບໍລິຫານ ແລະ ຄຸ້ມຄອງໃນດ້ານລະບຽບ, ແບບແຜນການເຮັດວຽກ, ການພົວ ພັນປະສານງານໃຫ້ມີຄວາມກົມກຽວ, ວ່ອງໄວ ແລະ ທັນສະໄໝ, ປັບປຸງລະບົບຂໍ້ມູນຂ່າວສານ IT (ລະບົບແນັດເວີກ Network) ແລະ ພື້ນຖານໂຄງລ່າງ ໃຫ້ແທດເໝາະກັບຄວາມຕ້ອງການ ແລະ ມີຄຸນນະພາບ, ວຽກງານຄຸ້ມຄອງບໍລິຫານຂະແໜງ ຖວທ, ປະກອບມີ 3 ແຜນງານ ແລະ 23 ໂຄງການ ຄືດັ່ງນີ້:**

__ແຜນງານທີ 1__: ຍົກລະດັບຄຸນນະພາບການ ບໍລິຫານ-ຄຸ້ມຄອງເອກະສານ ແລະ ຊັບສິນຂອງລັດ ແນ່ໃສ່ຮັບປະກັນທາງດ້ານຄຸນນະພາບເຕັກນິກວິຊາການ, ສ້າງສະພາບແວດລ້ອມທີ່ດີໃນການເຮັດວຽກ, ປະກອບມີ 14 ໂຄງການ.

__*ແຜນງານທີ 2*__: ປັບປຸງລະບົບຂໍ້ມູນຂ່າວສານ IT (ລະບົບແນັດເວີກ Network) ແລະ ພື້ນຖານໂຄງລ່າງ ໃຫ້ແທດເໝາະກັບຄວາມຕ້ອງການ ແລະ ມີຄຸນະພາບ ຂອງວຽກງານຄຸ້ມຄອງບໍລິຫານຂະແໜງ ຖວທ, ປະກອບມີ 5 ໂຄງການ.

__*ແຜນງານທີ 3*__: ສົ່ງເສີມການສ້າງ ແລະ ປັບປຸງນິຕິກຳໃນຂົງເຂດ ຖວທ, ໂຄສະນາເຜີຍແຜ່ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດນິຕິກຳໃນຂົງເຂດ ຖວທ, ປະກອບມີ 4 ໂຄງການ.

**__*ຍຸດທະສາດທີ 3*__: ສົ່ງເສີມການພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ການເຊື່ອມໂຍງ ກັບອານຸພາກພື້ນ ແລະ ສາກົນ, ປະກອບມີ 1 ແຜນງານ ແລະ 3 ໂຄງການ ດັ່ງນີ້:**

__*ແຜນງານທີ 1*__: ພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ການເຊື່ອມໂຍງກັບອານຸພາກພື້ນ ແລະ ສາກົນ, ປະກອບມີ 3 ໂຄງການ.

**__*ຍຸດທະສາດທີ 4*__: ສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງທົ່ວກະຊວງ, ໂຄສະນາເຜີຍ ແຜ່ຄວາມຮູ້, ຄວາມເຂົ້າໃຈກ່ຽວກັບບົດບາດ ຍິງ-ຊາຍ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ, ປະກອບມີ 1 ແຜນງານ ແລະ 8 ໂຄງການ ດັ່ງນີ້:**

__*ແຜນງານທີ 1*__: ໂຄສະນາເຜີຍແຜ່ຄວາມຮູ້, ຄວາມເຂົ້າໃຈກ່ຽວກັບບົດບາດ ຍິງ-ຊາຍ ຢ່າງກວ້າງຂວາງ, ປະກອບມີ 8 ໂຄງການ.

**__*ຍຸດທະສາດທີ 5*__: ສ້າງກິດຈະກຳເພື່ອເຕົ້າໂຮມຄວາມສາມັກຄີ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນໆ, ປະກອບມີ 1 ແຜນງານ ແລະ 2 ໂຄງການດັ່ງນີ້:**

__*ແຜນງານທີ 1*__: ປຸກລະດົມຄວາມສາມັກຄີອ້າຍນ້ອງ ພະນັກງານທົ່ວຂະແໜງການ ຖວທ, ປະກອບມີ 2 ໂຄງການ.

**4.4.2. ເພື່ອບັນລຸຈຸດປະສົງໃນການປັບປຸງກົງຈັກການຈັດຕັ້ງ ຂອງກະຊວງໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ, ປະກອບມີ 1 ຍຸດທະສາດ.**

**__*ຍຸດທະສາດທີ 1*__: ປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງການ ຖວທ ໃຫ້ມີຄວາມ ເຂັ້ມແຂງ ແລະ ເປັນລະບົບ , ປະກອບມີ 3 ແຜນງານ ແລະ 9 ໂຄງການດັ່ງນີ້:**

__*ແຜນງານທີ 1*__: ຄົ້ນຄວ້າປັບປຸງຍົກລະດັບພາລະບົດບາດຂອງຂະແໜງການຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ, ປະກອບມີ 3 ໂຄງການ.

__*ແຜນງານທີ 2*__: ຄົ້ນຄວ້າສ້າງ ແລະ ປັບປຸງຮ່າງກຳນົດມາດຖານພະນັກງານ ແລະ ຫຼັກການຄຸ້ມຄອງພະນັກງານ-ລັດຖະກອນ ໃນຂະແໜງການ ຖວທ, ປະກອບມີ 3 ໂຄງການ.

__*ແຜນງານທີ 3*__: ຍົກລະດັບມາດຕະຖານ ການປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ຂະແໜງການ ຖວທ, ປະກອບມີ 3 ໂຄງການ.

**4.4.3. ເພື່ອບັນລຸຈຸດປະສົງໃນການກໍ່ສ້າງ ແລະ ພັດທະນາບຸກຄະລາກອນ ໃຫ້ມີຄວາມເຂັ້ມແຂງທາງດ້ານຄຸນສົມບັດ ແລະ ຄວາມສາມາດ, ປະກອບມີ 2 ຍຸດທະສາດ.**

**__*ຍຸດທະສາດທີ 1*__: ຍົກສູງ ແລະ ປັບປຸງວຽກງານພັກ ແລະ ອົງການຈັດຕັ້ງມະຫາຊົນ ໃຫ້ມີຄວາມເຂັ້ມແຂງ, ປະກອບມີ 2 ແຜນງານ ແລະ 23 ໂຄງການດັ່ງນີ້:**

__*ແຜນງານທີ 1*__: ປັບປຸງກົງຈັກການຈັດຕັ້ງໜ່ວຍພັກ, ສະມາຊິກພັກ ແລະອົງການຈັດຕັ້ງຊາວໜຸ່ມໃຫ້ມີຄວາມເຂັ້ມແຂງ, ປະກອບມີ 11 ໂຄງການ.

<u>ແຜນງານທີ 2</u>: ບຳລຸງ-ຍົກລະດັບ ໃຫ້ສະມາຊິກຊາວໜຸ່ມກະຊວງ ຖວທ ແລະ ປັບປຸງ, ຊຸກຍູ້ ແລະ ສົ່ງເສີມ ຄວາມກ້າວໜ້າ ຂອງສະຫະພັນແມ່ຍິງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ປະກອບມີ 12 ໂຄງການ.

**<u>ຍຸດທະສາດທີ 2</u>: ໃນການຍົກລະດັບ ແລະ ປະຕິບັດນະໂຍບາຍພະນັກງານ-ລັດຖະກອນ ຂອງຂະແໜງ ການ ຖວທ ປະກອບມີ 2 ແຜນງານ ແລະ 6 ໂຄງການດັ່ງນີ້:**

<u>ແຜນງານທີ 1</u>: ບຳລຸງ-ກໍ່ສ້າງພະນັກງານ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ປະກອບມີ 4 ໂຄງການ.

<u>ແຜນງານທີ 2</u>: ຄົ້ນຄວ້າການປະຕິບັດນະໂຍບາຍ ຕໍ່ພະນັກງານບຳນານ ແລະ ພະນັກງານປະຈຳການ, ປະກອບມີ 2 ໂຄງການ.

**4.4.4. ເພື່ອບັນລຸຈຸດປະສົງຄຸ້ມຄອງ ການຈັດຕັ້ງປະຕິບັດແຜນພັດທະນາ ແລະ ການນຳໃຊ້ງົບປະມານໃນທົ່ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ, ປະກອບມີ 5 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ໃນການສ້າງແຜນຍຸດທະສາດພັດທະນາວຽກງານ ຖວທ 2021-2030, ປະກອບມີ 1 ແຜນ ງານ ແລະ 3 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ສ້າງແຜນຍຸດທະສາດພັດທະນາວຽກງານ ຖວທ ຂອງ ສປປ ລາວ, ປະກອບມີ 3 ໂຄງການ.

**<u>ຍຸດທະສາດທີ 2</u>: ພັດທະນາບຸກຄະລາກອນດ້ານການວາງແຜນ, ການເງິນການບັນຊີ ໃຫ້ມີຄວາມເຂັ້ມແຂງ, ປະກອບມີ 2 ແຜນງານ ແລະ 9 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ພັດທະນາບຸກຄະລາກອນ ທາງດ້ານວຽກງານແຜນການ ແລະ ການເງິນ, ມີ 7 ໂຄງການ.

<u>ແຜນງານທີ 2</u>: ປັບປຸງກົງຈັກການຈັດຕັ້ງ ໃຫ້ມີຄວາມເຂັ້ມແຂງ, ປະກອບມີ 2 ໂຄງການ.

**<u>ຍຸດທະສາດທີ 3</u>: ປັບປຸງລະບົບຂໍ້ມູນຂ່າວສານ ແລະ ຂອດປະສານງານກ່ຽວກັບວຽກແຜນການ-ການເງິນກັບແຕ່ລະກົມກອງ ຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມວ່ອງໄວ, ປະກອບມີ 1 ແຜນງານ ແລະ 4 ໂຄງ ການດັ່ງນີ້:**

<u>ແຜນງານທີ 1</u>: ປັບປຸງ, ນຳໃຊ້ເທັກໂນໂລຢີ ທາງດ້ານຂໍ້ມູນຂ່າວສານ (IT) ແລະ ລະບົບ NET WORK ປະກອບມີ 4 ໂຄງການ.

**<u>ຍຸດທະສາດທີ 4</u>: ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການພັດທະນາວຽກງານ ຖວທ ໃນທົ່ວປະເທດ, ປະກອບມີ 1 ແຜນງານ ແລະ 4 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: **ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການພັດທະນາວຽກງານ ຖວທ, ຂັ້ນສູນກາງ** ແລະ ທ້ອງຖິ່ນ **ປະກອບມີ 4 ໂຄງການ.**

**<u>ຍຸດທະສາດທີ 5</u>: ພັດທະນາ ແລະ ປັບປຸງການເກັບກຳ, ສັງລວມ, ວິໃຈ ຂໍ້ມູນສະຖິຕິໃຫ້ເປັນລະບົບ, ປະກອບມີ 1 ແຜນງານ ແລະ 5 ໂຄງການ ດັ່ງນີ້:**

<u>ແຜນງານທີ 1</u>: ການເກັບກຳ, ສັງລວມ, ວິໃຈຂໍ້ມູນສະຖິຕິ ຖວທ ທົ່ວປະເທດ ໃຫ້ມີຄວາມຊັດເຈນ ແລະ ເປັນລະບົບຄົບຊຸດ ປະກອບມີ 5 ໂຄງການ.

**4.4.5. ເພື່ອບັນລຸຈຸດປະສົງໃນການເປີດກວ້າງການຮ່ວມມື, ແລກປ່ຽນ ແລະ ເຊື່ອມໂຍງກັບສາກົນໃນວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ປະກອບມີ 1 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ເປີດກວ້າງການຮ່ວມມື ແລກປ່ຽນບົດຮຽນ ສອງຝ່າຍ, ຫຼາຍຝ່າຍ ແລະ ເຊື່ອມໂຍງ ກັບສາກົນ ໃນວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ປະກອບມີ 1 ແຜນງານ ແລະ 17 ໂຄງການ ດັ່ງນີ້:**

**<u>ແຜນງານທີ 1</u>**: ການຮ່ວມມືສາກົນໃນຂອບ ສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມື ກັບອົງການຈັດຕັ້ງສາກົນ ປະກອບມີ 17 ໂຄງການ.

**4.4.6. ເພື່ອບັນລຸຈຸດປະສົງໃນການຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຂອງຂະແໜງ ຖວທ ໃຫ້ເປັນລະບົບ, ຖືກຕ້ອງຕາມລະບຽບກົດໝາຍ ມີ 1 ຍຸດທະສາດ.**

**<u>ຍຸດທະສາດທີ 1</u>: ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຂອງຂະແໜງ ຖວທ ໃຫ້ເປັນລະບົບ , ຖືກຕ້ອງຕາມລະບຽບກົດໝາຍ ແລະ ຂໍ້ກຳນົດຕ່າງໆ, ປະກອບມີ 4 ແຜນງານ ແລະ 21 ໂຄງການ ດັ່ງນີ້:**

**<u>ແຜນງານ 1</u>**: ຕິດຕາມ, ກວດກາ ປັບປຸງກົງຈັກການຈັດຕັ້ງ, ປະກອບມີ 4 ໂຄງການ.

**<u>ແຜນງານ 2</u>**: ຊີ້ນຳ-ນຳພາ, ຄຸ້ມຄອງ ວຽກງານກວດກາ ທົ່ວອົງຄະນະພັກ ກະຊວງ, ປະກອບມີ 5 ໂຄງການ.

**<u>ແຜນງານ 3</u>**: ຄົ້ນຄວ້າ ປັບປຸງ ແລະ ສ້າງນິຕິກຳ ກ່ຽວກັບວຽກງານກວດກາ ແລະ ເຊື່ອມຊຶມ, ເຜີຍແຜ່ບັນດານິຕິກຳ ວຽກງານກວດກາ, ປະກອບມີ 8 ໂຄງການ.

**<u>ແຜນງານ 4</u>**: ພັດທະນາລະບົບຖານຂໍ້ມູນຂ່າວສານ ຂອງກົມກວດກາ, ປະກອບມີ 4 ໂຄງການ.

ເພື່ອໃຫ້ສອດຄ່ອງ ແລະ ແທດເໝາະກັບຄວາມສາມາດໃນການຕອບສະໜອງງົບປະມານຕົວຈິງໃນແຕ່ລະປີ ຂອງລັດຖະບານ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ຄັດຈ້ອນບັນດາແຜນງານ ແລະ ໂຄງການທີ່ເປັນຈຸດສຸມ ໃນພາກການລົງທຶນຂອງລັດ **5** ປີ **2016-2020** ດັ່ງນີ້:

**1. ວຽກງານຖະແຫຼງຂ່າວ ມີ 10 ແຜນງານ 17 ໂຄງການ ມູນຄ່າ 1,057,550.00 ລ້ານກີບ.**

**2. ວຽກງານວັດທະນະທຳ ມີ 05 ແຜນງານ 36 ໂຄງການ ມູນຄ່າ 195,521.00 ລ້ານກີບ.**

**3. ວຽກງານທ່ອງທ່ຽວ ມີ 17 ແຜນງານ 27 ໂຄງການ ມູນຄ່າ 394,960.00 ລ້ານກີບ.**

**4. ວຽກງານເສນາທິການ ມີ 10 ແຜນງານ 17 ໂຄງການ ມູນຄ່າ 60,650.00 ລ້ານກີບ.**

ລວມມູນຄ່າການລົງທຶນທັງໝົດ: **1,708** ຕື້ **681** ລ້ານກີບ. ໃນນີ້ ມີທຶນພາຍໃນ **356** ຕື້ **681** ລ້ານກີບ ທຶນຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ **1,352** ຕື້ກີບ.